# ນະໂຍບາຍດຶງດູດທຶນຈາກພາຍນອກ ໃນການພັດທະນາຢູ່ລາວ

ຂຽນໂດຍ: ປອ ໂພທອງ ໄຊທິບວົງສາ

## I. ສະພາບລວມການລະດົມທຶນຈາກພາຍນອກເພື່ອການພັດທະນາ

ໃນການຈັດຕັ້ງຜັນຂະຫຍາຍກົນໄກເສດຖະກິດແຜນໃໝ່ ຕາມແນວທາງການປ່ຽນແປງໃໝ່ ທີ່ມີຫລັກການຂອງພັກ ເພື່ອປະກອບສ່ວນຢ່າງຕັ້ງໜ້າ ຕໍ່ກັບການຈັດຕັ້ງປະຕິບັດສອງໜ້າທີ່ຍຸທະຍາດປົກປັກຮັກສາ ແລະສ້າງສາປະເທດຊາດ ໃນໄລຍະໃໝ່ ທີ່ຮຽກຮ້ອງໃຫ້ຕ້ອງມີການຫັນປ່ຽນຢ່າງຮອບດ້ານ, ເລິກເຊິ່ງ, ໜັກແໜ້ນ ແລະເຂັ້ມແຂງ ໃນແຕ່ລະຂົງເຂດວຽກງານ ໃນການພັດທະນາເສດຖະກິດ-ສັງຄົມ ແລະສາມາດຂັບເຄື່ອນຂະບວນການພັດທະນາປະເທດຊາດ ໃຫ້ກ້າວໄປສູ່ຄວາມສີວິໄລ ຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມ ທີ່ປະຊາຊົນພົນລະເມືອງຢູ່ດີກິນດີ, ປະເທດຊາດມີຄວາມມັ່ງຄັ່ງເຂັ້ມແຂງ, ມີສະຖຽນລະພາບທາງດ້ານການເມືອງ, ລະບົບເສດຖະກິດມີການເຕີບໃຫຍ່ຂະຫຍາຍຕົວ ດ້ວຍຈັງຫວະທີ່ໜັກແໜ້ນເຂັ້ມແຂງ ແລະຕໍ່ເນື່ອງນັ້ນ; ປະເທດເຮົາແມ່ນມີຄວາມຕ້ອງການທຶນຮອນ ສໍາລັບການພັດທະນາປະເທດຊາດ ໃນແຕ່ລະຂົງເຂດເປັນຈໍານວນຫລາຍ ແລະມະຫາສານ; ແຕ່ໃນເງື່ອນໄຂຕົວຈິງຂອງປະເທດ ທີ່ທຶນຮອນຈໍາເປັນໃນການພັດທະນາພັດຍັງອ່ອນນ້ອຍ ແລະມີຢູ່ໃນຂອບເຂດທີ່ຈໍາກັດ, ພື້ນຖານເສດຖະກິດຂອງປະເທດຍັງບໍ່ທັນແຂງແຮງ, ຄຽງຄູ່ກັບລາຍຮັບຂອງລັດຍັງບໍ່ທັນຫລາກຫລາຍ ແລະສາມາດສະໜອງທາງງດ້ານທຶນຮອນໄດ້ ໃນບັນດາແຜນການພັດທະນາ ທີ່ຈໍາເປັນທັງໝົດໄດ້, ຊໍ້າບໍ່ໜໍາເງື່ອນໄຂເສດຖະກິດຂອງພາກພື້ນ ແລະສາກົນມີການຫັນປ່ຽນ, ຜັນແປໄປຢ່າງໄວວາ ແລະສະລັບຊັບຊ້ອນຫຍຸ້ງຍາກສັບຊົນຫລາຍຂຶ້ນເລື້ອຍໆ, ຄຽງຄູ່ກັບສະພາບການແກ່ງແຍ່ງແຂ່ງຂັນຊ່ວງຊີງອໍານາດທາງດ້ານເສດຖະກິດ, ອໍານາດທາງດ້ານການເມືອງ ແລະຊັບພະຍາກອນທໍາມະຊາດ ຂອງບັນດາປະເທດມະຫາອໍານາດ ເຊິ່ງໄດ້ສ້າງຜົນກະທົບຢ່າງຮຸນແຮງ ຕໍ່ກັບລະບົບເສດຖະກິດ ແລະການພັດທະນາຂອງຫລາຍປະເທດໃນທົ່ວໂລກ ລວມທັງປະເທດລາວເຮົາ ເຮັດໃຫ້ຫລາຍປະເທດຕົກເຂົ້າສູ່ສະພາບ ຂາດສະຖຽນລະພາບທາງດ້ານເສດຖະກິດ, ເກີດວິກິດທາງດ້ານເສດຖະກິດ-ການເງິນ, ຄວາມທຸກຍາກຂາດເຂີນ ຂອງປະຊາຊົນພົນລະເມືອງທະວີຄວາມຮຸນແຮງຂຶ້ນ, ເຮັດໃຫ້ຂະບວນການພັດທະນາທີ່ຈໍາເປັນຂອງຫລາຍຂົງເຂດຕ້ອງໄດ້ຢຸດສະຫງັກ, ຄືບໜ້າຊ້າ ຫລື ບໍ່ມີປະສິດຕິພາບ ເນື່ອງຈາກທຶນຮອນໃນການພັດທະນາບໍ່ພຽງພໍ; ໃນເງື່ອນໄຂດັ່ງກ່າວນີ້ ຍິ່ງຮຽກຮ້ອງໃຫ້ປະເທດຊາດຕ້ອງມີທຶນ ໃນການພັດທະນາທີ່ເພີ່ມສູງຂຶ້ນຫລາຍເທົ່າ ຢ່າງຫລີກຫລ່ຽງບໍ່ໄດ້.

ເຫັນໄດ້ບົດບາດຄວາມສໍາຄັນຂອງທຶນ ໃນການພັດທະນາຂອງແຕ່ລະປະເທດ; ທ່ານ Kines ນັກເສດຖະສາດການພັດທະນາ ຊາວກັນນາດາ ໄດ້ໃຫ້ທັດສະນະວ່າ ທຶນເປັນປັດໄຈ ທີ່ສໍາຄັນຂອງການພັດທະນາເສດຖະກິດ ແລະການ

ພັດທະນາຂອງເສດຖະກິດ ກໍເປັນຕົວຊີ້ວັດພື້ນຖານທີ່ສຳຄັນຂອງການພັດທະນາປະເທດ[1]; ເຊິ່ງນັ້ນໝາຍຄວາມວ່າ ພື້ນຖານເສດຖະກິດ ແລະປະເທດຊາດຈະໄດ້ຮັບການພັດທະນາໄດ້ເປັນຢ່າງດີ ກໍຕໍ່ເມື່ອມີທຶນຮອນໃນການພັດທະນາທີ່ພຽງພໍ ແລະການນຳໃຊ້ທຶນເຂົ້າໃນການພັດທະນາທີ່ມີປະສິດຕິພາບສູງ; ດັ່ງນັ້ນ ຈຶ່ງສາມາດເວົ້າໄດ້ວ່າ ທຶນ ແລະການລົງທຶນ ແມ່ນປັດໄຈຕັດສິນ ແລະໝາກຫົວໃຈຂອງທຸກຂະບວນການພັດທະນາປະເທດຊາດ; ເມື່ອຮັບຮູໄດ້ເຖິງ ບົດບາດຄວາມສຳຄັນ ແລະຄວາມຈຳເປັນພື້ນຖານຂອງທຶນຮອນໃນການພັດທະນາຄືແນວນັ້ນ. ພັກປະຊາຊົນປະຕິວັດລາວ ກໍໄດ້ເຫັນຄວາມສຳຄັນ ແລະຄວາມຈຳເປັນດັ່ງກ່າວ ຈຶ່ງໄດ້ວາງແນວທາງທີ່ຊັດເຈນ, ໜັກແໜ້ນ ແລະສະໜີຕົ້ນສະເໜີປາຍຢ່າງປະດິດສ້າງ ໃນການດຶງດູດທຶນ ແລະກຳລັງແຮງຂອງການພັດທະນາ ຈາກຕ່າງປະເທດດ້ວຍຫລາກຫລາຍຮູບຫລາຍສີ ຕາມແນວທາງພົວພັນຕ່າງປະເທດ ແບບຫລາຍທິດ, ຫລາຍຝ່າຍ, ຫລາຍລະດັບ ບົນພື້ນຖານຫລັກການເຄົາລົບເອກະລາດ, ອຳນາດອະທິປະໄຕເຊິ່ງກັນແລະກັນ ແລະຕ່າງຝ່າຍຕ່າງມີຜົນປະໂຫຍດ [2] ເພື່ອຂັບເຄື່ອນຂະບວນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດຊາດ; ກອງປະຊຸມໃຫຍ່ ຄັ້ງທີ X ພັກປະຊາຊົນປະຕິວັດລາວ ກໍຍັງໄດ້ເນັ້ນໜັກວ່າ "ເພີ່ມທະວີການຍາດແຍ່ງກຳລັງແຮງຂອງຍຸກສະໄໝ ເປັນຕົ້ນແມ່ນ ທຶນຮອນ, ການຊ່ວຍເຫລືອ, ການຮ່ວມມື ແລະເຕັກໂນໂລຊີທັນສະໄໝ ເຂົ້າໃນການພັດທະນາປະເທດ"[3]. ພ້ອມນັ້ນ ໃນບົດລາຍງານການເມືອງ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ກໍຍັງໄດ້ກຳແໜ້ນ ແລະຍຶດໝັ້ນແນວທາງການໝູນໃຊ້ກຳລັງແຮງ ຈາກພາຍນອກເຂົ້າຊຸກຍູ້ຂະບວນການພັດທະນາ ຂອງປະເທດຊາດ ໂດຍໄດ້ລະບຸ ວ່າ: "ສ້າງເງື່ອນໄຂຍາດແຍ່ງດຶງດູດກຳລັງແຮງດ້ານທຶນຮອນ, ເຕັກໂນໂລຊີ, ນະວັດຕະກຳໃໝ່ ເພື່ອຂຸດຄົ້ນ ແລະເສີມຂະຫຍາຍຄວາມອາດສາມາດບົ່ມຊ້ອນ ແລະກຳລັງແຮງຂອງຊາດ"[4].

ບົນພື້ນຖານແນວທາງທີ່ຖືກຕ້ອງ ແລະມີຫລັກການຂອງພັກ, ພາຍໃຕ້ການຊີ້ນຳຢ່າງເດັດຂາດໂດຍກົງຂອງພັກ ໃນການຍາດແຍ່ງທຶນຮອນ ແລະກຳລັງແຮງສັງລວມພາຍນອກ ເຂົ້າຊຸກຍູ້ຂະບວນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ບັນດາອົງການຈັດຕັ້ງລັດຖະບານ ກໍໄດ້ຄົ້ນຄິດປະດິດສ້າງ ແລະນຳໃຊ້ຫລາກຫລາຍແນວທາງ, ວິທີການຫລາຍຮູບຫລາຍສີ, ຫລາກຫລາຍນະໂຍບາຍ ແລະເຕັກນິກ ໃນການດຶງດູດທຶນຮອນ ແລະກຳລັງແຮງຈາກພາຍນອກ ເຂົ້າມາປະເທດ ເພື່ອຂັບເຄື່ອນຂະບວນການພັດທະນາໃນຂົງເຂດຕ່າງໆ ເປັນຕົ້ນແແມ່ນ ການຍົກລະດັບຄວາມສຳພັນກັບບັນດາປະເທດເພື່ອນມິດ ແລະຄູ່ຮ່ວມພັດທະນາຜ່ານທາງການທູດ, ການໃຫ້ສິດທິພິເສດທາງດ້ານກົດໝາຍ, ການໃຫ້ສິດທິພິເສດທາງດ້ານເສດຖະກິດ, ສ້າງກິດຈະກຳການສົ່ງເສີມການລົງທຶນ ແລະການເອື້ອປະໂຫຍດໃຫ້ແກ່ການລົງທຶນ, ການເຊື່ອມໂຍງໂຄງລ່າງພື້ນຖານ

---

[1] Kines, M. B. (2018). Development Economics and Money Capital Relationship. *PressAcademia Procedia*, *7*(1), 209-212.

[2] ວາລະສານອາລຸນໃໝ່.(2016). ເອກະສານກອງປະຊຸມໃຫຍ່ຄັ້ງທີ X. *ໂຮງພິມແຫ່ງລັດ*, ໜ້າ 55.

[3] ວາລະສານອາລຸນໃໝ່.(2016). ເອກະສານກອງປະຊຸມໃຫຍ່ຄັ້ງທີ X. *ໂຮງພິມແຫ່ງລັດ*, ໜ້າ 56.

[4] ວາລະສານອາລຸນໃໝ່.(2021). ເອກະສານກອງປະຊຸມໃຫຍ່ຄັ້ງທີ XI. *ໂຮງພິມແຫ່ງລັດ*, ໜ້າ 40.

ການຂົນສົ່ງຂອງປະເທດກັບປະເທດຄູ່ຄ້າເປົ້າໝາຍ, ການໃຫ້ເງື່ອນໄຂທາງດ້ານການຍົກເວັ້ນພາສີອາກອນນໍາເຂົ້າ ແລະສົ່ງອອກສິນຄ້າ, ການໃຫ້ບູລິມະສິດພິເສດໃນການລົງທຶນ, ການໃຫ້ສິດທິການຍົກເວັ້ນວີຊາ, ຫລື ໂກຕາການເຂົ້າ-ອອກປະເທດ , ການຍອມຮັບເງື່ອນໄຂມາດຖານການພັດທະນາຂອງຜູ້ສະໜອງທຶນ, ການໃຫ້ບຸລິມະສິດໃນການຍົກເວັ້ນພາສີ ຫລື ລາຍຈ່າຍທີ່ຈໍາເປັນໃຫ້ແກ່ລັດ, ການສະໜອງສິດທິພິເສດ ໃນການເຂົ້າເຖິງແຫລ່ງຊັບພະຍາກອນທໍາມະຊາດ ແລະ ອື່ນໆ.

ຜ່ານການຈັດຕັ້ງປະຕິບັດງານຕົວຈິງກໍສາມາດຍາດໄດ້ຜົນສໍາເລັດ ໃນຫລາຍດ້ານທີ່ພົ້ນເດັ່ນ ເປັນຕົ້ນແມ່ນ ການດຶງດູດທຶນການຊ່ວຍເຫລືອເພື່ອການພັດທະນາ ຢ່າງເປັນທາງການ (ODA) ຫລື ທຶນການຊ່ວຍເຫລືອຫລ້າ, ການດຶງດູດການລົງທຶນໂດຍກົງຂອງຕ່າງປະເທດ (FDI), ການກູ້ຍືມທຶນດ້ວຍຮູບແບບຕ່າງໆ ຈາກບັນດາອົງການສາກົນ, ປະເທດຄູ່ຮ່ວມມືຍຸທະສາດ, ຄູ່ຮ່ວມມືພັດທະນາ ແລະບັນດາສະຖາບັນການເງິນສາກົນ ເພື່ອນໍາທຶນເຂົ້າມາສົມທົບ ແລະຂັບເຄື່ອນບັນດາກິດຈະກໍາ, ໂຄງການ ແລະຂະບວນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃນແຕ່ລະຂົງເຂດ, ແຕ່ລະລະດັບ, ແຕ່ລະກຸ່ມເປົ້າໝາຍ ການພັດທະນາ ຂອງພັກ-ລັດຖະບານ ໃນແຕ່ລະໄລຍະ.

## II. ຜົນສໍາເລັດໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍການລະດົມທຶນຈາກພາຍນອກ

### 1. ຜົນສໍາເລັດໃນການສ້າງ ແລະອອກນິຕິກໍາກ່ຽວກັບການລະດົມທຶນຈາກພາຍນອກເຂົ້າໃນການພັດທະນາ

ເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດ ແນວທາງການລະດົມ ແລະດຶງດູດທຶນ ເພື່ອຊຸກຍູ້ຂະບວນການປົກປັກຮັກສາສ້າງສາປະເທດໃນໄລຍະໃໝ່ ພັກ-ລັດຖະບານ ກໍໄດ້ສ້າງ ແລະປັບປຸງນິຕິກໍາທີ່ກ່ຽວຂ້ອງຫລາຍສະບັບ ເພື່ອເປັນບ່ອນອີງໃຫ້ແກ່ຂະບວນການດຶງດູດກໍາລັງແຮງ ແລະທຶນການພັດທະນາຈາກພາຍນອກ ເຂົ້າສູ່ຂະບວນການພັດທະນາຕົວຈິງຂອງປະເທດ ເປັນຕົ້ນແມ່ນ ສ້າງສ້າງກົດໝາຍ ຈໍານວນ 5 ສະບັບ ເຊັ່ນ: ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (2016), ກົດໝາຍວ່າດ້ວຍການປັບປຸງ ມາດຕາ 12 ຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (2016), ກົດໝາຍວ່າດ້ວຍການລົງທຶນຂອງລັດ (2016), ກົດໝາຍວ່າດ້ວຍສະຖິຕິ (2017), ແລະກົດໝາຍວ່າດ້ວຍການຄຸ້ມຄອງໜີ້ສິນສາທາລະນະ (2018); ພ້ອມນີ້ ລັດຖະບານກໍໄດ້ອອກດໍາລັດສໍາຄັນຈໍານວນໜຶ່ງ ເພື່ອເປັນການຄຸ້ມຄອງ ແລະສົ່ງເສີມການດຶງດູດການລົງທຶນເຂົ້າໃນການກິດຈະກໍາການພັດທະນາຕ່າງໆ ຂອງລັດຖະບານ ເຊັ່ນ: ດໍາລັດວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຄະນະກໍາມະການສົ່ງເສີມ ແລະຄຸ້ມຄອງການລົງທຶນ ສະບັບເລກທີ 05/ນຍ, ລົງວັນທີ 05 ມັງກອນ 2018, ດາລັດວ່າດ້ວຍເຂດເສດຖະກິດພິເສດ, ສະບັບເລກທີ 188/ລບ, ລົງວັນທີ 07 ມິຖຸນາ 2018, ດໍາລັດວ່າດ້ວຍ ການຄຸ້ມຄອງ ແລະການນໍາໃຊ້ການຊ່ວຍເຫລືອທາງການ ເພື່ອການພັດທະນາ ສະບັບເລກທີ 357/ລບ, ລົງວັນທີ 09 ຕຸລາ 2019; ດໍາລັດວ່າດ້ວຍການຮັບຮອງເອົາບັນຊີກິດຈະການຄວບຄຸມ ແລະ ກິດຈະການສໍາປະທານ ຂອງ ສປປ ລາວ ສະບັບເລກທີ 03/ນຍ, ລົງວັນທີ 10 ມັງກອນ 2019, ດໍາລັດວ່າດ້ວຍການລົງທຶນຮ່ວມລະຫວ່າງພາກລັດ ແລະພາກເອກະຊົນ ສະບັບເລກທີ 624/

ລບ, ລົງວັນທີ 21 ທັນວາ 2020, ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຍຸດທະສາດການລະດົມທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ສປປ ລາວ ຮອດປີ 2030 ສະບັບເລກທີ 236/ລບ, ລົງວັນທີ 18 ພຶດສະພາ 2020, ນອກຈາກນີ້ຍັງມີຄຳສັ່ງ, ຂໍ້ຕົກລົງ ແລະຄຳແນະນຳຕ່າງໆ ທີ່ກ່ຽວຂ້ອງການຄຸ້ມຄອງ ແລະສົ່ງເສີມຂະບວນການດຶງດູດທຶນເພື່ອການພັດທະນາເສດຖະກິດ-ສັງຄົມຂອງປະເທດ[5].

**2. ຜົນສຳເລັດໃນການດຶງດູດທຶນການຊ່ວຍເຫລືອທາງການເພື່ອການພັດທະນາ (ODA)**

ອີກຄວາມສຳເລັດໜຶ່ງ ໃນການຈັດຕັ້ງປະຕິບັດການດຶງດູດທຶນຮອນຈາກພາຍນອກ ເຂົ້າຊຸກຍູ້ຂະບວນການພັດທະນາຂອງຊາດ ກໍຄືການຍາດແຍ່ງເອົາການຊ່ວຍເຫລືອທາງການ ເພື່ອການພັດທະນາ ຫລື ທຶນ ODA. ພາຍຫລັງ ທີ່ ສປປ ລາວ ໄດ້ຈັດຕັ້ງປະຕິບັດແນວທາງການປ່ຽນແປງໃໝ່ ເປີດປະຕູສູ່ໂລກພາຍນອກການເພື່ອໝູນໃຊ້ກຳລັງແຮງພາຍນອກ ແລະດຶງດູດທຶນການຊ່ວຍເຫລືອຫລ້າ ຫລື ທຶນຊ່ວຍເຫລືອເພື່ອການພັດທະນາຢ່າງເປັນທາງການ (ODA) ຈາກບັນດາປະເທດຄູ່ຮ່ວມມືຍຸທະສາດ, ປະເທດເພື່ອນມິດສາກົນ, ແລະບັນດດຄູ່ຮ່ວມມືສາກົນເພີ່ມຂຶ້ນຢ່າງຕໍ່ເນື່ອງ; ອີງຕາມການລາຍງານຂອງ




ທະນາຄານໂລກ (World Bank) ໃຫ້ຮູ້ວ່າ ໃນປີ 1960 ລາວໄດ້ຮັບທຶນການ ຊ່ວຍເຫລືອເພື່ອການພັດທະນາ (ODA) ພຽງແຕ່ $33,37 ລ້ານ (USD), ມາເຖິງປີ1985 ກໍເພີ່ມຂຶ້ນພຽງແຕ່ $35,76 ລ້ານ (USD); ນັບແຕ່ປີ 1986 ເປັນຕົ້ນມາ ປະເທດເຮົາກໍສາມາດດຶງດູທຶນ ການຊ່ວຍເຫລືອທາງການເພື່ອການພັດທະນາ ເພີ່ມຂຶ້ນແບບກ້າວກະໂດດ ເຊິ່ງສະແດງອອກ ໃນປີ 1996 ພຽງແຕ່ໜຶ່ງທົດສະວັດຫລັງຈາກການຈັດຕັ້ງປະຕິບັດແນວທາງການປ່ຽນແປງໃໝ່ ທຶນການຊ່ວຍເຫລືອທາງການເພື່ອທານພັດທະນາ ຫລື ທຶນ ODA ໄຫລເຂົ້າປະເທດບັນລຸເຖິງ $248,47 ລ້ານ (USD), ມາເຖິງປີ 2008 ປະເທດເຮົາສາມາດດຶງທຶນການພັດທະນາເພີ່ມຂຶ້ນຫລາຍກວ່າໜຶ່ງທົບເທົ່າກັບ $457,39 ລ້ານ (USD), ແລະທຶນການຊ່ວຍເຫລືອທາງການເພື່ອການພັດທະນາ ຍັງມີແນວໂນ້ມເພີ່ມສູງຂຶ້ນຢ່າງຕໍ່ເນື່ອງມາເຖິງປີ 2019 ໄດ້ເພີ່ມຂຶ້ນສູງເຖິງ $621,57 ລ້ານ (USD); ເຖິງແມ່ນວ່າ ໃນປີ 2021 ນັ້ນ ຈະຫລຸດລົງເປັນ $569,16 ລ້ານ (USD)[6]; ໃນແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX (2021-2025) ໄດ້ຄາດຄະເນ ແລະ ສູ້

[5] ກະຊວງແຜນການ ແລະການລົງທຶນ.(2022). ປຶ້ມສັງລວມກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງຂະແໜງແຜນການ ແລະ ການລົງທຶນ. *ໂຮງພິມແຫ່ງລັດ,* ໜ້າ 3-5.

[6] World Bank. (2023). *Net official development assistance and official aid received-Lao PDR*, ເຂົ້າອ່ານຄັ້ງວັນທີ 27 ພຶດສະພາ 2023, ຈາກເວັບໄຊ: https://data.worldbank.org/indicator/DT.ODA.ALLD.CD?end=2021&locations=LA&start=1960&view=chart

ຊົ່ນລະດົມທຶນການຊ່ວຍເຫລືອ ODA ໃຫ້ໄດ້ໂດຍສະເລ່ຍ 37,344 ຕື້ກີບ ເທົ່າກັບ 18% ຂອງການລົງທຶນທັງໝົດຂອງລັດ ໃນປີ 2022[7].

**3. ຜົນສໍາເລັດໃນການດຶງດູດທຶນຈາກພາຍນອກ ດ້ວຍຮູບແບບການລົງທຶນໂດຍກົງຈາກຕ່າງປະເທດ (FDI)**

ໃນຊຸມປີຜ່ານມາ ບັນຍາກາດຂອງຂະບວນການລົງທຶນໂດຍກົງຂອງຕ່າງປະເທດ (FDI) ກໍໄດ້ຮັບການຈັດຕັ້ງຜົນຂະຫຍາຍຢ່າງຕັ້ງໜ້າ ຈາກແນວທາງດານປ່ຽນແປງໃໝ່ ໃນການດຶງດູດທຶນຈາກພາຍນອກ ການລົງທຶນໂດຍກົງຈາກຕ່າງປະເທດ ຢູ່ໃນຂະແໜງການຕ່າງໆ ເຊິ່ງໂດຍລວມແລ້ວກໍມີແນວໂນ້ມເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະດ້ວຍຈັ່ງວະທີ່ໄວພໍສົມຄວນ; ເຖິງແມ່ນວ່າ ຈະມີແນວໂນ້ມຫລຸດລົງເລື້ອຍໆ ນັບແຕ່ປີ 2018 ເປັນຕົ້ນມາ; ອີງຕາມແຫລ່ງຂໍ້ມູນຈາກ ສູນຂໍ້ມູນ




ຂ່າວສານ ແລະການສໍາຫລວດທາງດ້ານເສດຖະກິດ ໄດ້ຊີ້ໃຫ້ເຫັນວ່າ ໃນປີ 2013 ລວມຍອດການລົງທຶນຂອງຕ່າງປະເທດ ໃນ ສປປ ລາວ ມີປະມານ $130 ລ້ານ (USD), ມາເຖິງປີ 2015 ການລົງທຶນໂດຍກົງຂອງຕ່າງປະເທດ ໄດ້ເພີ່ມຂຶ້ນປະມານ $245 ລ້ານ (USD), ໃນປີ 2016 ການລົງທຶນໂດຍກົງຂອງຕ່າງປະເທດໄດ້ເພີ່ມຂຶ້ນເກືອບໜຶ່ງທົບ ເມື່ອທຽບກັບປີຜ່ານມາ ເຊິ່ງເພີ່ມຂຶ້ນບັນລຸເຖິງ $420 ລ້ານ (USD), ຕໍ່ຈາກນັ້ນການລົງທຶນໂດຍກົງຂອງຕ່າງປະເທດ ກໍມີທ່າເພີ່ມຂຶ້ນຢ່າງຕໍ່ເນື່ອງ ດ້ວຍຈັງວະທີ່ໝັ້ນທ່ຽງ ແລະສະໝໍ່າສະເໝີຈົນຮອດປີ 2018 ສາມາດບັນລຸໄດ້ເຖິງເກືອບ $590 ລ້ານ (USD), ໃນປີ 2019 ຫາຕົ້ນປີ 2020 ຍ້ອນສປປ ລາວໄດ້ຮັບຜົນກະທົບຈາກການແຜ່ລະບາດຈາກ Covid 19 ຢູ່ພາຍໃນປະເທດ ທີ່ໄດ້ສົ່ງຜົນກະທົບຢ່າງຮ້າຍແຮງຕໍ່ທຸກພາກສ່ວນເສດຖະກິດ ເນື່ອງຈາກຕ້ອງໄດ້ມີການປິດປະເທດ ເພື່ອສະກັດກັ້ນການແຜ່ລະບາດຂອງເຊື້ອພະຍາດ Covid 19 ຈຶ່ງເຮັດໃຫ້ການລົງທຶນໂດຍຈາກຕ່າງປະເທດ ຫລຸດລົງຢ່າງໄວວາ ໃນຕົ້ນປີ 2020 ຍັງເຫລືອປະມານ $190 ລ້ານ (USD), ມາເຖິງປີ 2021 ເຖິງແມ່ນວ່າ ຈະມີການພື້ນໂຕເດັກໜ້ອຍຈາກການລົງທຶນໂດຍກົງຈາກຕ່າງປະເທດ ຂຶ້ນມາເປັນ $365 ລ້ານ (USD) ແຕ່ກໍມີທ່າອ່ຽງຫລຸດລົງໃນປີ 2022 ຍັງເຫລືອພຽງແຕ່ປະມານ $200 ລ້ານ (USD) ແລະຍັງມີແນວໂນ້ມຫລຸດລົງຢ່າງຕໍ່ເນື່ອງໃນຊຸມປີຕໍ່ໜ້າອີກ[8].

---

[7] ວາລະສານອາລຸນໃໝ່.(2021). ເອກະສານກອງປະຊຸມໃຫຍ່ຄັ້ງທີ XI. *ໂຮງພິມແຫ່ງລັດ*, ໜ້າ 122-123.

[8] Census and Economic Information Center (CEIC). (2023). *Laos-Foreign Direct Investment*, ເຂົ້າອ່ານໃນຄັ້ງວັນທີ 9 ມິຖຸນາ 2023, ຈາກເວັບໄຊ: https://www.ceicdata.com/en/indicator/laos/foreign-direct-investment#:~:text=Laos 20Foreign 20Direct 20Investment 20 (FDI,mn 20in 20the 20previous 20quarter.

**4. ຜົນສຳເລັດໃນການດຶງດູດທຶນຈາກພາຍນອກດ້ວຍຮູບແບບການກູ້ຢືມ (Loan)**

ໃນການດຶງດູດທຶນຮູບແບບໜຶ່ງຂອງພັກ-ລັດຖະບານ ສປປ ລາວ ເພື່ອສະໜອງທຶນເຂົ້າໃນບັນດາໂຄງການພັດທະນາຂະໜາດໃຫຍ່ ທີ່ຈຳເປັນຂອງປະເທດ ກໍຄືການກູ້ຢືມທຶນຈາກບັນດາປະເທດເພື່ອນມິດຍຸທະສາດ, ປະເທດຄູ່ຮ່ວມການພັດທະນາ, ບັນດາສະຖາບັນການເງິນສາກົນ ຢູ່ພາກພື້ນ ແລະສາກົນ ເຊິ່ງໃນໄລຍະຜ່ານມາ ກໍສາມາດກູ້ຢືມທຶນ ເພື່ອນາເຂົ້າມາພັດທະນາຂະແໜງ ການຕ່າງໆຂອງປະເທດຊາດ ເປັນຈຳນວນຫລວງຫລາຍ ແລະມີແນວໂນ້ມເພີ່ມສູງຂຶ້ນເລື້ອຍໆ ໃນແຕ່ລະປີ; ອີງຕາມການລາຍງານຂອງ ສູນຂໍ້ມູນຂ່າວສານ ແລະການສຳຫລວດທາງດ້ານເສດຖະກິດ (Census and Economic Information Center) ໄດ້ຊີ້ໃຫ້ເຫັນວ່າ ນັບແຕ່ປີ 2004 ກ່ອນເກີດວິກິດການເສດຖະກິດ ໃນພາກພື້ນອາຊຽນ ສປປ ລາວ ໄດ້ກູ້ຢືມທຶນຈາກພາຍນອກປະມານພຽງແຕ່ $188.19 ລ້ານ (USD) ພາຍຫລັງວິດກິດການເສດຖະກິດໃນພາກພື້ນອາຊຽນ ສປປ ລາວ ກໍເປັນປະເທດໜຶ່ງທີ່ໄດ້ຮັບຜົນກະທົບຈາກວິດການເສດຖະກິດດັ່ງກ່າວ ເຊິ່ງ ສປປ ລາວ ຕ້ອງໄດ້ກູ້ຢືມເງິນຈາກພາຍນອກ ເພື່ອພື້ນພູເສດຖະກິດ ແລະຊຸກຍູ້ຂະບວນການພັດທະນາຕ່າງໆ ເພີ່ມຂຶ້ນປະມານ $430 ລ້ານ (USD), ມາເຖິງປີ 2014 ອັດຕາສ່ວນການກູ້ຢືມເງິນຂອງ ສປປ ລາວ ເພີ່ມຂຶ້ນເປັນ $4,350 ລ້ານ (USD), ແລະເພີ່ມຂຶ້ນຢ່າງກ້າວກະໂດດ ເປັນຈານວນ $8,148.20 ລ້ານ (USD) ໃນປີ 2018. ເມື່ອກ້າວເຖິງປີ 2020 ອັດຕາສ່ວນການກູ້ຢືມເງິນ ຂອງລັດຖະບານ ສປປ ລາວ ເພີ່ມຂຶ້ນສູ່ອັນດັບສູງສຸດເຖິງ $8,548.20 ລ້ານ (USD) ເຖິງແມ່ນວ່າ ໃນປີ 2021 ແລະ 2022 ນັ້ນ ຈະມີແນວໂນ້ມຫລຸດລົງມາ ເປັນ $8,059.20 ລ້ານ (USD) ແລະ $7,825.20 ລ້ານ (USD) ຕາມລຳດັບ[9]; ແຕ່ກໍຖືວ່າ ຈຳນວນການກູ້ຢືມເງິນຈາກພາຍນອກ ຂອງລັດຖະບານລາວ ເພື່ອນຳໃຊ້ເຂົ້າໃນການພັດທະນາປະເທດ ກໍຍັງຢູ່ໃນອັນດັບທີ່ສູງພໍສົມຄວນ.

ຜົນຈາກການກູ້ຢືມທຶນຈາກຕ່າງປະເທດ ເພື່ອໝູນໃຊ້ເຂົ້າໃນບັນດາໂຄງການລັດຖະບານ ແລະແກ້ໄຂບັນຫາຕ່າງໆທີ່ສຳຄັນຂອງຊາດ ໃນປີ 2012 ສປປ ລາວ ຍັງມີໜີ້ສິນຕ່າງປະເທດ ຈຳນວນ $3,036.75 ລ້ານ (USD) ເຊິ່ງກວມເອົາ 33.43% ຂອງ GDP ເພີ່ມຂຶ້ນ 3,15% ເມື່ອທຽບກັບປີ 2011; ໃນນັ້ນ ໜີ້ສິນທີ່ກູ້ຢືມໄລຍະຍາວແບບສອງຝ່າຍກວມ 46,28% ແລະໜີ້ສິນເງິນກູ້ຢືມໄລຍະຍາວແບບຫລາຍຝ່າຍ ກວມ 53,72% ຂອງໜີ້ສິນຕໍ່ຕ່າງປະເທດທັງໝົດ[10]. ມາເຖິງປີ 2015 ໜີ້ສິນພາຍນອກຂອງ ສປປ ລາວ ໄດ້ເພີ່ມຂຶ້ນເປັນ $5,627 ລ້ານ (USD) ກວມເອົາ 45.6% ຂອງ GDP ເຊິ່ງໄດ້ເພີ່ມຂຶ້ນອີກ 3.8% ເມື່ອທຽບກັບປີ 2014 ໃນນັ້ນ ໜີ້ສິນກູ້ຢືມໄລຍະຍາວແບບສອງຝ່າຍ ກວມເອົາ 69.7% ແລະໜີ້

[9] Census and Economic Information Center (CEIC). (2023). *Laos's Total Loans from Dec 2004 to Dec 2022,* ເຂົ້າອ່ານໃນຄັ້ງວັນທີ 1 ມິຖຸນາ 2023, ຈາກເວັບໄຊ: https://www.ceicdata.com/en/indicator/laos/total-loans

[10] ທະນາຄານແຫ່ງ ສປປ ລາວ. (2012). ບົດລາຍງານເສດຖະກິດ ປະຈຳປີ 2012*.* ໜ້າ 35.

ສິນກູ້ຢືມໄລຍະຍາວແບບຫລາຍຝ່າຍກວມເອົາພຽງແຕ່ 30.3% ຂອງໜີ້ສິນພາຍນອກປະເທດທັງໝົດ[11]. ສັງເກດເຫັນໄດ້ວ່າໜີ້ສິນພາຍນອກ ຂອງ ສປປ ລາວ ແມ່ນຍັງມີແນວໂນ້ມເພີ່ມຂຶ້ນຕໍ່ເນື່ອງໃນທຸກໆປີ ມາເຖິງປີ 2017 ໜີສິນພາຍນອກຂອງ ສປປ ລາວ ເພີ່ມຂຶ້ນເປັນ $8,538.44 ລ້ານ (USD) ເພີ່ມຂຶ້ນ 10.64% ເມື່ອປຽບທຽບກັບປີ 2016 ໃນນັ້ນ ໜີ້ກູ້ຢືມໄລຍະຍາວສອງຝ່າຍກວມເອົາ ປະມານ 78 % ແລະໜີ້ກູ້ຢືມໄລຍະຍາວແບບຫລາຍຝ່າຍກວມພຽງແຕ່ 22% ຂອງໜີ້ສິນພາຍນອກທັງໝົດ[12]; ປີ 2019 ໜີພາຍນອກຂອງປະເທດ ຍັງສືບຕໍ່ເພີ່ມຂຶ້ນເປັນ $9,935.63 (USD) ເຊິ່ງເພີ່ມຂຶ້ນ 6.60% ເມື່ອປຽບທຽບກັບ ປີ 2018 ໃນນັ້ນໜີ້ສິນກູ້ຢືມໄລຍະຍາວສອງຝ່າຍ ກວມເອົາສູງເຖິງ 66.8% ແລະໜີ້ສິນກູ້ຢືມໄລຍະຍາວກວມເອົາພຽງ 17% ຂອງໜີ້ສິນຂອງລັດຖະບານທັງໝົດ[13]; ສໍາລັບປີ 2021 ໜີ້ສິນຂອງລັດຖະຍັງສືບຕໍ່ເພີ່ມຂຶ້ນເປັນ $10.213,40 ລ້ານ (USD) ເຖິງແມ່ນວ່າຈະຫລຸດລົງ 4,40% ເມື່ອທຽບໃສ່ປີ 2020, ອັດຕາສ່ວນໜີ້ຂອງລັດຖະບານກວມເອົາເຖິງ 53,81% ຂອງ GDP ໃນນັ້ນເງິນກູ້ຢືມແມ່ນ $9.190,30 ລ້ານ (USD) ກວມເອົາ 80,98% ກວມເອົາໜີ້ສິນຕໍ່ຕ່າງປະເທດທັງໝົດ ແລະຍອດໜີ້ສິນຕໍ່ຕ່າງປະເທດທີ່ເປັນພັນທະບັດ ມີຈໍານວນ $1.023,10 ລ້ານ (USD) ກວມເອົາ 10,02% ຂອງໜີ້ສິນລວມ ຂອງລັດຖະບານຕໍ່ຕ່າງປະເທດທັງໝົດ ເຖິງແມ່ນວ່າຈະມີແນວໂນ້ມຫລຸດລົງເຖິງ 26,06% ເມື່ອທຽບໃສ່ກັບໄລຍະດຽວດັນຂອງປີຜ່ານມາ ແຕ່ໜີ້ສິນຂອງລັດຖະບານທີ່ກູ້ຢືມຈາກຕ່າງປະເທດກໍຍັງສູງຢູ່[14]. ມາເຖິງປີ 2022 ໜີ້ສິນຂອງລັດຖະບານ ຍັງກວມອັດຕາສ່ວນ 55% ຂອງ GDP ຫລື ເທົ່າກັບ $10.439,26 ລ້ານ (USD)[15].

### III. ຂໍ້ຄົງຄ້າງໃນການລະດົມທຶນຈາກພາຍນອກ ເພື່ອຂັບເຄື່ອນຂະບວນການພັດທະນາຂອງປະເທດ

ຜ່ານການຈັດຕັ້ງປະຕິບັດນະໂຍບາຍລະດົມທຶນຈາກພາຍນອກ ເພື່ອຊຸກຍູ້ບັນດາຂະບວນການພັດທະນາ ທາງດ້ານເສດຖະກິດ-ສັງຄົມຂອງຊາດ ຈະໄດ້ຮັບຜົນເປັນຢ່າງດີ ແຕ່ຜ່ານການວິເຄາະ, ໄຈ້ແຍກ ແລະພິຈາລະນາຢ່າງລະອຽດຖີ່ຖ້ວນເຖິງບັນດາຂະບວນການຕ່າງໆ ແລະບົນພື້ນຖານໝາກຜົນ ຂອງການຈັດຕັ້ງປະຕິບັດນະໂຍບາຍການລະດົມທຶນ ຂອງລັດຖະບານແລ້ວ ກໍເຫັນໄດ້ວ່າ ຍັງມີບັນຫາທີ່ຄົງຄ້າງສໍາຄັນຈໍານວນໜຶ່ງ ທີ່ຈໍາເປັນຕ້ອງໄດ້ຮັບການແກ້ໄຂຢ່າງຮີບດ່ວນ ແລະທັນການ ເປັນຕົ້ນແມ່ນ

---

[11] ທະນາຄານແຫ່ງ ສປປ ລາວ. (2015). ບົດລາຍງານເສດຖະກິດ ປະຈໍາປີ 2015. ໜ້າ 13.

[12] ທະນາຄານແຫ່ງ ສປປ ລາວ. (2017). ບົດລາຍງານເສດຖະກິດ ປະຈໍາປີ 2017. ໜ້າ 12.

[13] ທະນາຄານແຫ່ງ ສປປ ລາວ. (2019). ບົດລາຍງານເສດຖະກິດ ປະຈໍາປີ 2019. ໜ້າ 17.

[14] ທະນາຄານແຫ່ງ ສປປ ລາວ. (2021). ບົດລາຍງານເສດຖະກິດ ປະຈໍາປີ 2021. ໜ້າ 20.

[15] Census and Economic Information Center (CEIC). (2023). *Laos Government Debt to GDP*, ເຂົ້າອ່ານໃນຄັ້ງວັນທີ 9 ມິຖຸນາ 2023, ຈາກເວັບໄຊ: https://tradingeconomics.com/laos/government-debt-to-gdp

**1. ຂະບວນການສ້າງ ແລະອອກນິຕິກຳກ່ຽວກັບການການລະດົມທຶນຈາກພາຍນອກ ຍັງຢູ່ໃນຂອບເຂດຈຳກັດທາງດ້ານເນື້ອໃນ ແລະຂະບວນການບັງຄັບໃຊ້.**

ໃນຂະບວນການສ້າງ ແລະອອກນິຕິກຳ ຂອງບັນດາໜ່ວຍງານ ທີ່ເຮັດໜ້າທີ່ເປັນເສນາທິການກ່ຽວກັບການການລະດົມທຶນ ແລະກຳລັງແຮງຈາກພາຍນອກ ເຂົ້າຊຸກຍູ້ຂະບວນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ເຫັນໄດ້ວ່າຍັງບໍ່ທັນມີປະສິດທິພາບສູງເທົ່າທີ່ຄວນ ທາງດ້ານເນື້ອໃນ ແລະຂະບວນການເຜີຍແຜ່ບັງຄັບໃຊ້; ນິຕິກາກ່ຽວກັບການລະດົມທຶນຈາກພາຍນອກ ຈຳນວນໜຶ່ງ ສ້າງຂຶ້ນບົນພື້ນຖານຂໍ້ມູນຂັ້ນສອງ, ຂາດການເກັບກຳສຳຫລວດຂໍ້ມູນຕົວຈິງ ໃນລະດັບປະຕິບັດການຂັ້ນຮາກຖານ, ຂາດການສຳຫລວດເກັບກຳຂໍ້ມູນຮອບດ້ານ, ການມີສ່ວນຮ່ວມທີ່ຫ້າວຫັນຈາກພາກສ່ວນທີ່ກ່ຽວຂ້ອງກັບນິຕິກຳ, ຂາດວິໄສທັດໃນການຄາດຄະເນ ປະສິດຕິບັດການຄວບຄຸມໃນໄລຍະຍາວ ແລະຄວາມສະດຸ້ງໄວຕໍ່ສະພາບການປ່ຽນແປງໃໝ່ ຂອງວຽກງານການລະດົມທຶນໃນພາກພື້ນ ແລະສາກົນ ຍັງຢູ່ໃນລະດັບຕ່ຳ ຈຶ່ງເຮັດໃຫ້ເກີດມີຫລາຍນິຕິກຳເກີດຂຶ້ນຫລາຍ ແລະມີເນື້ອໃນທີ່ຊ້ຳຊ້ອນກັນ; ເນື້ອໃນໃນບາງນິຕິກຳຍັງມີລັກສະຄຸມເຄືອ, ຄວາມຈະແຈ້ງຊັດເຈນບໍ່ສູງ ເຮັດໃຫ້ເກີດມີຊ່ອງຫວ່າງ ໃນການສວຍໃຊ້ຊ່ອງຫວ່າງດັ່ງກ່າວ ເພື່ອເອື້ອຜົນປະໂຫຍດໃຫ້ກັບກຸ່ມຄົນຈຳນວນໜຶ່ງເປັນຕົ້ນແມ່ນ ນິຕິກຳກ່ຽວກັບການຈັດຕັ້ງປະຕິບັດ ຮູບແແບການລະດົມທຶນຈາກພາຍນອກ ແລະການໃຫ້ບຸລິມະສິດໃດໜຶ່ງເປັນສິ່ງຕອບແທນ, ເຮັດໃຫ້ກຸ່ມຄົນບໍ່ດີສວຍໃຊ້ຊ່ອງຫວ່າງຂອງນິຕິກຳລັກລອບ ແລະກອບໂກຍຊັບພະຍາກອນທຳມະຊາດໂດຍອາໄສເງື່ອນໄຂເພື່ອເປັນການດຶງດູດການລົງທຶນ ແລະການກູ້ຢືມທຶນ ເພື່ອການພັດທະນາ; ນິຕິກຳຈຳນວນໜຶ່ງບໍ່ມີເນື້ອໃນທີ່ຄົບຖ້ວນ, ຂະບວນການສ້າງນິຕິກຳຈຳນວນໜຶ່ງມີຄວາມຊັກຊ້າ ໃນຂະບວນການຮັບຮອງຂອງນິຕິກຳ ຈຶ່ງບໍ່ທັນກັບສະພາບການປ່ຽນແປງໃໝ່ທີ່ເກີດຂຶ້ນ ແລະນິຕິກຳຈຳນວນໜຶ່ງແມ່ນໃຊ້ມາຫລາຍປີ ບໍ່ໄດ້ຮັບການປັບປຸງໃຫ້ສອດຄ່ອງກັບສະພາບໃນປັດຈຸບັນ.

ນອກຈາກນັ້ນ ການອອກນິຕິກຳ ເພື່ອເປັນພື້ນຖານການກຳນົດນະໂຍບາຍການລະດົມທຶນ ຫລື ການລົງທຶນຈາກພາຍນອກ ເຂົ້າຊຸກຍູ້ຂະບວນການພັດທະນາແຕ່ລະຂົງເຂດ ຍັງບໍ່ທັນກວ້າງຂວາງ, ລົງເລິກໄດ້ແຕ່ລະຂົງເຂດວຽກງານ ແລະ ຊັດເຈນເທົ່າທີ່ຄວນ; ຍິ່ງໄປກວ່ານັ້ນ ຂະບວນການເຜີຍແຜ ແລະເຊື່ອມຊຶມນິຕິກຳ ແລະເອກະສານທີ່ສາຄັນກ່ຽວກັບການລະດົມທຶນຈາກພາຍນອກ ຫລື ການຊ່ວຍເຫລືອຈາກພາຍນອກ ຍັງບໍ່ທັນສາມາດລົງເລິກໃນລະດັບຮາກຖານ ແຕ່ລະໜ່ວຍງານຂອງລັດ ທີ່ກ່ຽວຂ້ອງ ເຊິ່ງເປັນຜົນເຮັດໃຫ້ຂະບວນການພິຈາລະນາ ແລະສົ່ງເສີມການລະດົມທຶນ ຈາກພາຍນອກຍັງເຮັດບໍທັນໄດ້ດີ, ຂາດມາດຕະຖານດຽວກັນ ແລະໃນບາງກໍລະນີ ກໍບໍ່ທັນສາມາດສະກັດກັ້ນໄດ້ບັນຫາແບບແຝງຕ່າງໆ ທີ່ເຂົ້າມາພ້ອມກັບການໃຫ້ຄວາມຊ່ວຍເຫລືອ ຫລື ການສະໜັບສະໜູນຜ່ານການລົງທຶນໂດຍກົງຂອງຕ່າງປະເທດໄດ້. ອີກດ້ານໜຶ່ງຍ້ອນຄວາມເຂັ້ມງວດ ແລະລະດັບຄວາມໂປ່ງໄສ ໃນການຈັດຕັ້ງປະຕິບັດນິຕິກຳ ໃນການດຶງດູດທຶນ ແລະການຊ່ວຍເຫລືອ

ຈາກບັນດາປະເທດເພື່ອນມິດຍຸທະສາດ, ບັນດາຄູ່ຮ່ວມພັດທະນາຕ່າງໆ ເປັນປັດໄຈສຳຄັນ ໃນການບັນທອນຄວາມອາດສາມາດຕົວຈິງ ໃນການດຶງດູດການສະໜັບສະໜູນດ້ານທຶນຮອນ ແລະການຊ່ວຍເຫລືອ ໃນຕົວຈິງໄດ້ ເຊິ່ງໃນມະຕິ XI ຂອງພັກກໍໄດ້ລະບຸວ່າ "ການປັບປຸງສະພາບແວດລ້ອມໃນການລົງທຶນ ແລະດຳເນີນທຸລະກິດ ແມ່ນຍັງເຮັດບໍ່ທັນໄດ້ດີ ຕາມນະໂຍບາຍ ແລະຄຳສັ່ງ ທີ່ວາງອອກ, ຍັງມີຫລາຍຈຸດທີ່ຂາດຄວາມໂປ່ງໃສ ເຊິ່ງເປັນການກີດໜ່ວງຖ່ວງດຶງຕໍ່ການພັດທະນາ"[16].

**2. ຂະບວນການຄຸ້ມຄອງທຶນ ແລະໂຄງການພັດທະນາ ທີ່ໄດ້ຮັບຈາກທຶນການຊ່ວຍເຫລືອທາງການ ເພື່ອການພັດທະນາ ຍັງບໍ່ທັນມີປະສິດຕິພາບສູງ, ຂາດຄຸນນະພາບໃນການແກ້ໄຂບັນຫາຕົວຈິງ ແລະບໍ່ທັນມີຄວາມຄວາມຍືນຍົງ.**

ໃນການການດຶງດູດທຶນການຊ່ວຍເຫລືອທາງການ ເພື່ອການພັດທະນາ (ODA) ເຖິງແມ່ນວ່າ ຈະມີແນວໂນ້ມເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະສະໝ່ຳສະເໝີ ແລະທຶນດັ່ງກ່າວກໍເປັນແຫລ່ງລາຍຮັບທີ່ສຳຄັນ ຂອງລັດຖະບານ ສາລັບການລົງທຶນໃນຫລາຍໂຄງການພັດທະນາຂອງລັດ ເຊິ່ງຈະເປັນຮູບແບບການຊ່ວຍເຫລືອຫລ້າ, ການໃຫ້ກູ້ຢືມດ້ວຍເງື່ອນໄຂຜ່ອນຜັນ, ການຊ່ວຍເຫລືອດ້ານເຕັກນິກວິຊາການ, ການໃຫ້ການຊ່ວຍເຫລືອດ້ານມະນຸດສະທຳ ເພື່ອເປັນການສະໜັບສະໜູນ ການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ໃນແຕ່ລະດ້ານ ແຕ່ຜ່ານການພິຈາລະນາຢ່າງຮອບດ້ານ ແລະວົງຈອນຂອງທຶນການຊ່ວຍເຫລືອທາງການເພື່ອການພັດທະນາ (ODA) ກໍເຫັນໄດ້ວ່າ ຍັງມີຫລາຍຈຸດທີ່ຍັງບໍ່ທັນເຮັດໄດ້ດີ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດທຶນການຊ່ວຍເຫລືອ ໃນບາງໂຄງການ ກໍພຽງແຕ່ເປັນການເລັ່ງໃສ່ໃຫ້ບັນລຸເປົ້າໝາຍ ຂອງການຊ່ວຍເຫລືອເທົ່ານັ້ນ ເຊິ່ງບໍ່ໄດ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຕົວຈິງ ໃນການປັບປຸງ ຫລື ພັດທະນາຂອງຄົນໃນທ້ອງຖິ່ນ ດັ່ງນັ້ນ ຈຶ່ງມີຫລາຍໂຄງການພັດທະນາທີ່ໄດ້ຮັບທຶນການຊ່ວຍເຫລືອ ODA ບໍ່ໄດ້ຮັບການມີສ່ວນຮ່ວມຂອງປະຊາຊົນໃນທ້ອງຖິ່ນ ແລະບໍ່ມີຄວາມຍືນຍົງ; ໃນບາງກໍລະນີ ກໍຍັງຂາດການຈັດລຽງບູລິມະສິດຂອງຂະແໜງການ ທີ່ຕໍ່ເນື່ອງ ແລະສອດຄ່ອງກັນ ໂດຍສະເພາະການພັດທະນາ ຂະແໜງການໃຫ້ມີຄວາມໂດດເດັ່ນ ແລະເປັນຕົວແບບ ໃນການພັດທະນາທີ່ຄົບຖ້ວນ[17].

ໃນບາງກໍລະນີ ການຕິດຕາມ ແລະ ປະເມີນແຜນງານ/ໂຄງການ ທຶນຊ່ວຍເຫລືອທາງການເພື່ອການພັດທະນາ ຍັງຂາດຄວາມຊ່ຽວຊານ ແລະ ວິຊາການສະເພາະດ້ານ ແລະ ແຜນການ ອັນລະອຽດ ຂອງບັນດາກະຊວງທີ່ເປັນຜູ້ຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ ເຊິ່ງເຮັດໃຫ້ການລາຍງານສະພາບການຈັດຕັ້ງປະຕິບັດໂຄງການ ບໍ່ແທດເໝາະກັບຄວາມເປັນຈິງເທົ່າທີ່ຄວນ, ລວມທັງການແກ້ໄຂບັນຫາຕ່າງໆ ບໍ່ທັນກັບສະພາບຈິ່ງ ພາໃຫ້ການຈັດຕັ້ງປະຕິບັດແຜນງານ/ໂຄງການມີຄວາມ

[16] ວາລະສານອາລຸນໃໝ່.(2021). ເອກະສານກອງປະຊຸມໃຫຍ່ຄັ້ງທີ XI. *ໂຮງພິມແຫ່ງລັດ*, ໜ້າ 112.
[17] ກະຊວງແຜນການ ແລະ ການລົງທຶນ. (2020). ຍຸທະສາດການລະດົມທຶນຊ່ວຍເຫລືອທາງການ ເພື່ອການພັດທະນາ ສປປ ລາວ ຮອດປີ 2030. ໂຮງພິມແຫ່ງລັດ, ໜ້າ 12.

ຊັກຊ້າ[18]. ນອກຈາກນັ້ນ ບັນຫາການຮົ່ວໄຫລ ຂອງທຶນການຊ່ວຍເຫລືອດັ່ງກ່າວ ກໍຍັງເປັນປັດໄຈທີ່ສຳຄັນ ເຮັດໃຫ້ປະເທດ ຫລື ອົງການຈັດຕັ້ງສາກົນ ທີ່ໃຫ້ທຶນການຊ່ວຍເຫລືອ ມີຄວາມກັງວົນ ຍ້ອນຂະບວນການດຳເນີນງານ ຂອງຜູ້ທີ່ກ່ຽວຂ້ອງ ຍັງຂາດຄວາມໂປ່ງໃສເທົ່າທີ່ຄວນ ຫລື ອາດເກີດການຈົງໃຈໃຫ້ເກີດການສໍ້ລາດບັງຫລວງ ເພື່ອຍັກຍອກເອົາທຶນການພັດທະນາ ທີ່ໄດ້ຮັບການຊ່ວຍເຫລືອນັ້ນ [19] ເຊິ່ງເປົ້າໝາຍຜູ້ທີ່ໄດ້ຮັບການຊ່ວຍເຫລືອບໍ່ສາມາດໄດ້ຮັບ ຫລື ເຂົ້າເຖິງທຶນການຊ່ວຍເຫລືອໄດ້.

**3. ການສົ່ງເສີມການດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ ຍັງບໍ່ທັນມີປະສິດຕິພາບສູງ, ການປະເມີນຕີລາຄາ ແລະຕິດຕາມກວດກາ ການລົງທຶນໂດຍກົງຂອງຕ່າງປະເທດ ຍັງບໍ່ທັນເປັນລະບົບຄົບຊຸດຕໍ່ເນື່ອງ, ແລະມີປະສິດຕິຜົນທາງດ້ານເສດຖະກິດຕໍ່າ.**

ເຖິງແມ່ນວ່າລັດຖະບານ ຈະມີຄວາມພະຍາຍາມຢ່າງຕໍ່ເນື່ອງ ໃນການປັບປຸງ ແລະແກ້ໄຂສະພາບເງື່ອນໄຂ ຂອງປະເທດ ເພື່ອອຳນວຍຄວາມສະດວກໃນການດຶງດູການລົງທຶນຈາກພາຍໃນ ແລະຕ່າງປະເທດ ໂດຍສະເພາະແມ່ນການລົງທຶນໂດຍກົງຈາກຕ່າງປະເທດ ແຕ່ກໍເຫັນໄດ້ວ່າ ຍັງບໍ່ທັນເຮັດໄດ້ດີ ເປັນຕົ້ນແມ່ນ ໃນການສ້າງຄວາມໂປ່ງໃສໃນຂະບວນການຄົ້ນຄວ້າພິຈາລະນາ ການເຂົ້າມາລົງທຶນຂອງຕ່າງວປະເທດ ຍັງມີຫລາຍຂອດຂັ້ນຕອນ ແລະບໍ່ໂປ່ງໃສ ເຊິ່ງກອງປະຊຸມໃຫຍ່ຂອງພັກປະຊາຊົນປະຕິວັດລາວ ຄັ້ງທີ XI ກໍໄດ້ຍອມຮັບວ່າ "ການປັບສະພາບແວດລ້ອມການລົງທຶນ ແລະການດຳເນີນທຸລະກິດ ຍັງເຮັດບໍ່ທັນໄດ້ດີຕາມນະໂຍບາຍ ແລະຄຳສັ່ງທີ່ວາງອອກ ຍັງມີຫລາຍຈຸດທີ່ຂາດຄວາມໂປ່ງ"[20]. ໃນບາງກໍລະນີ ການລົງທຶນໂດຍກົງຂອງຕ່າງປະເທດ ພາຍຫລັງໄດ້ຮັບການອະນຸມັດແລ້ວ ໃນຂອດການຈັດຕັ້ງປະຕິບັດຕົວຈິງ ພັດບໍ່ທັນສາມາດປະຕິບັດຕາມກົດໝາຍ ຫລື ນິຕິກຳສະເພາະໃນການຄຸ້ມຄອງການລົງທຶນໂດຍກົງຂອງຕ່າງປະເທດໄດ້ດີ ເປັນຕົ້ນແມ່ນ ບໍ່ສາມາດດຳເນີນໄດ້ຕາມບົດວິພາກເສດຖະກິດ ແລະວິຊາການ ທີ່ໄດ້ສະເໜີມາກ່ອນ, ບໍ່ສາມາດແຈ້ງການເຄື່ອນໄຫວຂອງທຶນ ທີ່ນຳເຂົ້າໃນການລົງທຶນພັດທະນາຕົວຈິງ, ບໍ່ສາມາດປະຕິບັດຕາມເງື່ອນໄຂໃນການຊຳລະໜີ້ສິນ, ເງື່ອນໄຂທາງດ້ານສິ່ງແວດລ້ອມ ແລະການພັດທະນາສັງຄົມ, ຊຸມຊົນທີ່ໄດ້ຮັບຜົນກະທົບຈາກການລົງທຶນ ແລະອື່ນໆ ໃນທີ່ສຸດກໍເຮັດໃຫ້ມີການສັ່ງໂຈະດຳເນີນໂຄງການ ແລະບໍ່ສາມາດບັນລຸໄດ້ຈຸດປະສົງ ຂອງການລົງທຶນໄດ້ ເຊິ່ງບັນຫາເຫລົ່ານີ້ຍັງປະກົດໃຫ້ເຫັນຢູ່.

---

[18] ກະຊວງແຜນການ ແລະ ການລົງທຶນ. (2020). ຍຸທະສາດການລະດົມທຶນຊ່ວຍເຫລືອທາງການ ເພື່ອການພັດທະນາ ສປປ ລາວ ຮອດປີ 2030. ໂຮງພິມແຫ່ງລັດ, ໜ້າ 18.

[19] Development Aid. (2017). Pros and Cons of Humanitarian Aid. ເຂົ້າອ່ານໃນຄັ້ງວັນທີ 9 ມິຖຸນາ 2023, ຈາກເວັບໄຊ: https://www.developmentaid.org/news-stream/post/80/80-2

[20] ວາລະສານອາລຸນໃໝ່.(2021). ເອກະສານກອງປະຊຸມໃຫຍ່ຄັ້ງທີ XI. *ໂຮງພິມແຫ່ງລັດ*, ໜ້າ 112

ອີກດ້ານໜຶ່ງ ເນື່ອງຈາກມີຊ່ອງຫວ່າງຂອງນິຕິກຳ ເຮັດໃຫ້ຜົນກຳໄລຈາກການລົງທຶນ ບໍ່ໄດ້ຮັບການກະຈ່າຍໃຫ້ກັບພື້ນຖານເສດຖະກິດພາຍໃນປະເທດຫລາຍເທົ່າທີ່ຄວນ ໂດຍສະເພາະຂະແໜງການລົງທຶນ ທີ່ຕ້ອງໄດ້ນຳຜະລິດຕະພັນອອກໄປຂາຍຢູ່ຕ່າງປະເທດ ເຮັດຜົນກຳໄລຂອງການລົງທຶນດັ່ງກ່າວບໍ່ເຂົ້າປະເທດ ແຕ່ກັບຄືນໄປຫາປະເທດເຈົ້າຂອງທຶນໂດຍກົງ ຊ້ຳບໍ່ໜຳໃນບາງຂະແໜງການ ແມ່ນໄດ້ຮັບບູລິມະສິດພິເສດ ແລະ ການຍົກເວັ້ນພາສີໃນການນຳເຂົ້າຜະລິດປະພັນ, ເຄື່ອງມື ແລະກົນຈັກຈາກຕ່າງປະເທດ ເຊິ່ງສິ່ງດັ່ງກ່າວນັ້ນ ແມ່ນໄດ້ຊ້ຳເຕີມການຂາດດູນດ້ານການຄ້າກັບຕ່າງປະເທດຮຸນແຮງຂຶ້ນຕື່ມອີກ. ໃນບາງກໍລະນີ ຂອງການລົງທຶນໂດຍກົງຈາກຕ່າງປະເທດ ເນື່ອງຈາກການໃຫ້ສິດທິພິເສດແກ່ການລົງທຶນຫລາຍເກີນໄປ ຂອງຕ່າງປະເທດ ໃນການລົງທຶນ ຢູ່ພາຍໃນປະເທດ ເປັນການສ້າງຄວາມກົດດັນ ກັບການລົງທຶນພາຍປະເທດ ທີ່ລົງທຶນໃນຂະແໜງດຽວກັນກັບການອະນຸມັດໃຫ້ກັບການລົງທຶນຂອງຕ່າງປະເທດ ເຊິ່ງເຮັດໃຫ້ການລົງທຶນຂອງຕ່າງປະເທດມີຂໍ້ໄດ້ປຽບກວ່າການລົງທຶນຈາກພາຍໃນ ແລ້ວສົ່ງຜົນເຮັດໃຫ້ການລົງທຶນພາຍໃນ ບໍ່ໄດ້ຮັບການສົ່ງເສີມໃນຂະແໜງການດັ່ງກ່າວ ຫລື ອາດບໍ່ສາມາດແຂ່ງຂັນກັບການລົງທຶນໂດຍກົງ ຂອງຕ່າງປະເທດໄດ້; ຍິ່ງໄປກວ່ານັ້ນ ຍັງມີການສ້າງຄວາມຫຍຸ້ງຍາກໃຫ້ກັບພື້ນຖານເສດຖະກິດໃນຕໍ່ໜ້າ ເນື່ອງຈາກການລົງທຶນໂດຍກົງຈາກຕ່າງປະເທດ ແມ່ນຈະຄ້ອນຢູ່ແຕ່ຂົງເຂດເສດຖະກິດທີ່ມີເງື່ອນໄຂດີ ແລະໄດ້ຮັບການພັດທະນາແລ້ວ ສ່ວນການລົງທຶນຂອງພາຍໃນປະເທດ ພັດຈະກະຈຸກຢູ່ແຕ່ຂົງເຂດເສດຖະກິດທີ່ບໍ່ທັນໄດ້ຮັບການພັດທະນາ ແລະບໍ່ມີເງື່ອນໄຂສະດວກປານໃດ ໃນການພັດທະນາ ແລະລົງທຶນ[21].

**4. ລະບົບການຄຸ້ມຄອງ ແລະຊຳລະໜີ້ສິນຂອງລັດຖະບານ ຍັງບໍ່ທັນມີລັກສະນະລວມສູນ, ບໍ່ເປັນລະບົບຕໍ່ເນື່ອງ ທີ່ມີຄຸນນະພາບສູງເທົ່າທີ່ຄວນ ເຊິ່ງເປັນສາເຫດສຳຄັນນຳໄປສູ່ວິດກິດການດ້ານການເງິນ ແລະເສດຖະກິດ.**

ການກູ້ຢືມທຶນຈາກຕ່າງປະເທດ ແລະບັນດາສະຖາບັນການເງິນສາກົນ ດ້ວຍຮູບແບບຕ່າງໆ ກໍເປັນຮູບການໜຶ່ງ ໃນການດຶງດູດທຶນເຂົ້າໃນການຂັບເຄື່ອນ ຂະບວນການພັດທະນາປະເທດ ສຳລັບ ສປປ ລາວ, ໂດຍຜ່ານການຈັດຕັ້ງປະຕິບັດຕົວຈິງເຫັນວ່າ ການລະດົມທຶນຈາກພາຍນອກ ເຂົ້າໃນການພັດທະນາ ຍັງຕ້ອງໄດ້ເອົາໃຈໃສ່ໃນຫລາຍດ້ານ ເນື່ອງຈາກລະບົບການຄຸ້ມຄອງການກູ້ຢືມ ແລະການຊຳລະໜີ້ສິນໃນການກູ້ຢືມຍັງບໍ່ທັນມີປະສິດຕິພາບດີເທົ່າທີ່ຄວນ ເຊິ່ງສະແດງອອກ ເຮັດໃຫ້ລັດຖະບານມີໜີ້ສະສົມເພີ່ມສູງຂຶ້ນໃນແຕ່ລະປີ ໃນໄລຍະຜ່ານມາ; ນອກຈາກນັ້ນ ການການົດອັດຕາການຂາດດູນຂອງງົບປະມານແຫ່ງລັດ ແຕ່ລະໄລຍະບໍ່ອີງໃສ່ຄວາມສາມາດລາຍຮັບພາຍໃນ ແລະການຊ່ວຍເຫລືອລ້າຕົວຈິງ ແຕ່ເອົາການກູ້ຢືມພາຍນອກມາດູນດ່ຽງລາຍຈ່າຍບໍລິຫານປົກກະຕິຂອງລັດ ຈຶ່ງພາໃຫ້ເກີດມີການສະສົມໜີ້ສິນຢ່າງຕໍ່ເນື່ອງ

[21] Nolintha, V., & Yee, L. S. (2016). Inequality in Laos and the Role of FDI. *International Journal of Economic Policy in Emerging Economies*, ໜ້າ 244.

ຢາກທີ່ຈະຄວບຄຸມໄດ້ ແລະກ້າວສູ່ວິກິດການທາງດ້ານການເງິນ[22]. ນັ້ນໝາຍຄວາມວ່າ ການກູ້ຢືມທຶນຈາກພາຍນອກ ບໍ່ໄດ້ຮັບໃຊ້ໃຫ້ແກ່ການລົງທຶນທີ່ສາມາດສ້າງຜົນໄດ້ຮັບໄດ້ໄວ ຫລື ອາດຈະນຳໃຊ້ທຶນທີ່ກູ້ຢືມມານຳໃຊ້ເຂົ້າຜິດຈຸດປະສົງຂອງມັນ.

ໃນບາງກໍລະນີ ການກູ້ຢືມທຶນຂອງລັດຖະບານ ພັດຖືກນຳໃຊ້ເຂົ້າໃນການພັດທະນາໂຄງລ່າງພື້ນຖານຂອງປະເທດ ທີ່ສາມາດສ້າງຜົນຕອບແທນໄດ້ໄລຍະຍາວ ຫລື ເອື້ອອຳນວຍຄວາມສະດວກໃນການສ້າງລາຍຮັບທາງອື່ນ ເຊິ່ງໄດ້ເປັນເງື່ອນໄຂສຳຄັນ ທີ່ລັດຕ້ອງໄດ້ແບກຫາບອັດຕາດອກເບ້ຍ ເພື່ອຊຳລະທຶນ ທີ່ໄດ້ກູ້ຢືມມາໃນໄລຍະຍາວ; ໃນບາງກໍລະນີ ການກູ້ຢືມທຶນມາລົງທຶນໃນໂຄງການພັດທະນາຕ່າງໆ ໃນໄລຍະຜ່ານມາ ແມ່ນມີປະສິດທິຜົນບໍ່ສູງ ບໍ່ສາມາດສ້າງພື້ນຖານເສດຖະກິດ ແລະຖານລາຍຮັບ ທີ່ມາຊຳລະດອກເບ້ຍ ແລະຕົ້ນທຶນໃນການກູ້ຢືມໄດ້ ໂດຍສະເພາະແມ່ນໂຄງການລົງທຶນໃນຂະແໜງສາຍສົ່ງໄຟຟ້າ, ດາວທຽມ, ການບິນລາວ, ແລະອື່ນໆ[23] ເນື່ອງຈາກບັນດາໂຄງການລົງທຶນພັດທະນາ ສາລັບໂຄງລ່າງພື້ນຖານເຫລົ່ານີ້ ແມ່ນຕ້ອງການທຶນຈຳນວນມະຫາສານ ແຕ່ບໍ່ສາມາດສ້າງຜົນຕອບແທນໄດ້ທັນທີ ຫລື ໄລຍະສັ້ນໄດ້. ນອກຈາກນີ້ ການກູ້ຢືມທຶນຈາກສະຖາບັນການການເງິນຕ່າງປະເທດ ຫລື ບັນດາປະເທດຄູ່ຮ່ວມພັດທະນາ ແມ່ນບັນດາລັດວິສາຫະກິດ ເພື່ອມາປັບປຸງພັດທະນາ ແລະດຳເນີນທຸລະກິດຂອງລັດ ແຕ່ບັນດາຫົວໜ່ວຍທຸລະກິດເຫລົ່ານີ້ ພັດບໍ່ທັນສາມາດສ້າງຜົນກຳໄລຈາກການກູ້ຢືມທຶນນັ້ນໄດ້ດ້ວຍຕົນເອງໄດ້ ຈຶ່ງກາຍເປັນພາລະຂອງລັດຖະບານແບ່ງຫາບພາລະໜີ້ສິນການກູ້ຢືມການລົງທຶນຈາກບັນດາລັດວິສາຫະກິດຈຳນວນໜຶ່ງ ທີ່ບໍ່ມີຄຸນນະພາບນັ້ນ.

## IV. ວິທີການປັບປຸງການດຶງດູດທຶນເພື່ອການພັດທະນາ

ເພື່ອເປັນການຈັດຕັ້ງຜັນຂະຫຍາຍ ແລະສ້າງກົນທັນປ່ຽນອັນເປັນພື້ນຖານ ແລະແຂງແຮງ ໃນການດຶງດູດການລົງທຶນຈາກພາຍນອກປະເທດ ມີຄວາມຈຳເປັນຕ້ອງໄດ້ ຕ້ອງໄດ້ສ້າງການຫັນປ່ຽນຢ່າງແຂງແຮງ ແລະຮອບດ້ານ ໃນວຽກງານການດຶງດູດທຶນຈາກພາຍນອກ ເຂົ້າໃນຂະບວນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ມີຄຸນພາບສູງ; ມີຄວາມຈຳເປັນຕ້ອງມີການຈັດຕັ້ງປະຕິບັດ, ດຳເນີນການຕິດຕາມກວດກາ ແລະປະເມີນຜົນ ນັບແຕ່ນິຕິກຳການຄຸ້ມຄອງການລະດົມທຶນ ແລະການນຳໃຊ້ທຶນຈາກພາຍນອກໃຫ້ມີປະສິດຕິພາບ ແລະປະສິດທິຜົນສູງສຸດ ຄື:

**1. ສ້າງ ແລະປັບປຸງນິຕິກຳກ່ຽວກັບການລະດົມທຶນ ແລະດຶງດູດທຶນຈາກພາຍນອກ ໃຫ້ເປັນລະບົບຄົບຊຸດ, ຮອບດ້ານທີ່ອຸດົມສົມບູນ ແລະມີລັກສະນະຍຸທະສາດທາງດ້ານເນື້ອໃນ, ຮູບການ ແລະການບັງຄັບໃຊ້ທີ່ເຂັ້ມງວດທົ່ວເຖິງ;** ເຊິ່ງເລີ່ມຈາກບັນດາຂະບວນການຕໍ່ໄປນີ້: **(1)** ຂະບວນການສ້າງ ຫລື ປັບປຸງນິຕິກາກ່ຽວກັບການດຶງດູດທຶນຈາກພາຍນອກ ມີຄວາມຈຳເປັນຕ້ອງໄດ້ມີການສຳຫລວດຢ່າງລະອຽດຊັດເຈນ ຈາກພາກສ່ວນທີ່ກ່ຽວຂ້ອງຈາກການລະດົມທຶນຈາກພາຍນອກ ເພື່ອ

---

[22] ວາລະສານອາລຸນໃໝ່.(2021). ເອກະສານກອງປະຊຸມໃຫຍ່ຄັ້ງທີ XI. *ໂຮງພິມແຫ່ງລັດ*, ໜ້າ 110.
[23] ວາລະສານອາລຸນໃໝ່.(2021). ເອກະສານກອງປະຊຸມໃຫຍ່ຄັ້ງທີ XI. *ໂຮງພິມແຫ່ງລັດ*, ໜ້າ 111.

ການພັດທະນາ ແລະກວດສອບຄວາມຮອບດ້ານຂອງນິຕິກຳ ລວມທັງນິຕິກຳທີ່ມີຢູ່ແລ້ວ ເພື່ອຫລີກຫລ່ຽງບັນຫາການຊ້ຳຊ້ອນ ແລະຈຳກັດຊ່ອງຫວ່າງຂອງນິຕິກຳ. **(2)** ທຸກນິຕິກຳທີ່ຈະສ້າງຂຶ້ນໃໝ່ ແລະການປັບປຸງນິຕິກຳ ທີ່ມີຢູ່ແລ້ວກ່ຽວກັບການລະດົມທຶນ ແລະການໝູນໃຊ້ທຶນ ໃນການພັດທະນາ ມີຄວາມຈຳເປັນຕ້ອງໄດ້ຮັບການມີສ່ວນຮ່ວມ ແລະການປະກອບສ່ວນຈາກຫລາຍຝ່າຍທີ່ກ່ຽວຂ້ອງ ເຊິ່ງຈະມີສ່ວນສຳຄັນເຮັດໃຫ້ເນື້ອໃນມີຄວາມອຸດົມສົມບູນ, ຮູບການຈັດຕັ້ງປະຕິບັດທີ່ແທດເໝາະກັບສະພາບຄວາມເປັນຈິງ, ແລະມີຜົນການບັງຄັບໃຊ້ທີ່ມີປະສິດຕິພາບ. **(3)** ຂະບວນການຈັດຕັ້ງເຜີຍແຜ່ຕ້ອງເປັນລະບົບຕໍ່ເນື່ອງທັນສະໄໝ ສາມາດເຂົ້າເຖິງໄດ້ກຸ່ມເປົ້າໝາຍ ຂອງນິຕິກຳຢ່າງທົ່ງເຖິງ; ທຸກນິຕິກາທີ່ສາຄັນຕ້ອງໄດ້ຮັບການສຳມະນາຜັນຂະຫຍາຍ ເປັນລະບົບຜ່ານລະບົບອອນລາຍ, ແບບເຊິ່ງໜ້າ, ແລະກຸ່ມເປົ້າໝາຍກໍສາມາດເຂົ້າເຖິງໄດ້ນິຕິກຳໄດ້ຕະຫລອດເວລາ. **(4),** ມີລະບົບການຕິດຕາມກວດກາ ແລະປະເມີນຜົນການຈັດຕັ້ງປະຕິບັດນິຕິກາ ທີ່ຕໍ່ເນື່ອງເປັນປົກກະຕິ ແລະທັນສະໄໝ ເພື່ອສາມາດເຫັນໄດ້ຂໍ້ຈຳກັດ ແລະຄວາມຮຽກຮ້ອງຕ້ອງການອັນໃໝ່, ແລະສາມາດປັບປຸງແກ້ໄຂຂໍ້ຈຳກັດ ຂອງນິຕິກຳຢ່າງທັນການ.

**2. ສ້າງຄວາມໜ້າເຊື່ອຖື, ເພີ່ມປະສິດຕິຜົນ ແລະຄວາມໂປ່ງໃສ ໃນການນຳໃຊ້ທຶນໃຫ້ຖືກກັບເປົ້າໝາຍ ກັບການພັດທະນາ ໂດຍສະເພາະທຶນທີ່ສະໜອງໃຫ້ເປັນການຊ່ວຍເຫລືອຫລ້າ ຫລື ທຶນໃຫ້ການກູ້ຢືມດ້ວຍເງື່ອນໄຂທີ່ຜ່ອນຜັນຈາກບັນດາປະເທດຄູ່ຮ່ວມມືຍຸທະສາດ, ຄູ່ຮ່ວມມືພັດທະນາ ແລະບັນດາສະຖາບັນການເງິນສາກົນ.**

ເພື່ອເປັນການເພີ່ມປະສິດຕິພາບໃນການດຶງດູດ ທຶນການຊ່ວຍເຫລືອທາງການເພື່ອການພັດທະນາ ຈາກພາຍນອກໃນການຂັບເຄື່ອນຂະບວນການພັດທະນາ ໃຫ້ເພີ່ມຂຶ້ນຫລາຍຂຶ້ນ ແລະເປັນກຳລັງແຮງສັງລວມສຳຄັນ ໃນການຊຸກຍູ້ບັນດາໂຄງການ ແລະບັນດາກິດຈະກຳການພັດທະນາ ຂອງລັດຢ່າງມີຄຸນນະພາບສູງນັ້ນ **(1)** ໃຫ້ຄວາມສຳຄັນ ແລະບູລິມະສິດໃນການປັບປຸງ ບັນດານະໂຍບາຍ ແລະ ລະບຽບການຕ່າງໆ ໃຫ້ມີຄວາມສອດຄ່ອງກັບເປົ້າໝາຍການພັດທະນາ ຂອງບັນດາຄູ່ຮ່ວມພັດທະນາ ເພື່ອເຮັດໃຫ້ຂະບວນການຄຸ້ມຄອງ ແລະຈັດຕັ້ງປະຕິບັດ ມີຄວາມໂປ່ງໃສຫລາຍຂຶ້ນ, ມີຄວາມພ້ອມທາງດ້ານພະນັກງານວິຊາການ ແລະ ງົບປະມານ ໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນງານ ແລະໂຄງການພັດທະນາຂອງລັດຢ່າງມີປະສິດຕິພາບ; **(2)** ໃນການສ້າງຄວາມໜ້າເຊື່ອຖື ແລະຄວາມໄວ້ວາງໃຈ ເຊິ່ງເປັນປັດໄຈສາຄັນໃນການຊຸກຍູ້ໃຫ້ບັນດາປະເທດ ແລະອົງການຈັດຕັ້ງສາກົນ ທີ່ໃຫ້ການຊ່ວຍເຫລືອເພີ່ມ ແລະຂະຫຍາຍທຶນການຊ່ວຍເຫລືອທາງການເພື່ອການພັດທະນາ ໃຫ້ແກ່ ສປປ ລາວ ຫລາຍຂຶ້ນ ຈຳເປັນຕ້ອງມີຊ່ອງທາງ ແລະລະບົບການປະສານງານຢ່າງໃກ້ສິດກັບບັນດາປະເທດ ແລະອົງການ ທີ່ໃຫ້ການຊ່ວຍເຫລືອ ເພື່ອເປັນການສ້າງຄວາມເຂົ້າໃຈ ແລະລາຍງານຢ່າງເປັນລະບົບຕໍ່ເນື່ອງ ແລະປົກກະຕິ; **(3)** ຍົກລະດັບ ແລະປັບປຸງຖານຂໍ້ມູນທີ່ທັນສະໄໝ ເພື່ອເປັນການສະໜອງຂໍ້ມູນ ແລະໂຄສະນາເຜີຍແຜ່ຜົນສຳເລັດ ຂອງການຈັດຕັ້ງປະຕິບັດບັນດາການສະໜັບສະໜູນ ທຶນການຊ່ວຍເຫລືອທາງການເພື່ອການພັດທະນາ ຢູ່

ສປປ ລາວ ຄ່ຽງຄູ່ກັບມີການຕິດຕັ້ງລະບົບການຕິດຕາມກວດກາປະເມີນຜົນທີ່ທັນສະໄໝ ສາມາດຮັບຮູ້ຜົນໄດ້ໃນເວລາອັນສັ້ນ, ວ່ອງໄວ, ໂປ່ງໃສ ແລະໜ້າເຊື່ອຖື. ຖ້າເຮັດໄດ້ແນວນັ້ນ ເຊື່ອແນ່ວ່າ ສປປ ລາວ ຈະສາມາດດຶງດູດທຶນການຊ່ວຍເຫລືອທາງການ ເພື່ອການພັດທະນາ ໄດ້ເພີ່ມຫລາຍຂຶ້ນຢ່າງກ້າວກະໂດດ ຈາກບັນດາປະເທດຄູ່ຮ່ວມມືເພື່ອການພັດທະນາເກົ່າ ແລະຂະຫຍາຍໄປສູ່ຄູ່ຮ່ວມມືເພື່ອການພັດທະນາໃໝ່ ໃນເອທີພາກພື້ນ ແລະສາກົນ.

**3. ດຶງດູດ ແລະລະດົມການລົງທຶນໂດຍກົງຈາກຕ່າງປະເທດທີ່ມີຄຸນນະພາບສູງ ແລະມີປະສິດຕິພາບ.**

ການລົງທຶນໂດຍກົງຈາກຕ່າງປະເທດ ທີ່ມີຄຸນນະພາບສູງ ແລະມີປະສິຕິພາບ ແມ່ນເປັນການລົງທຶນທີ່ສາມາດສ້າງຜະລິດຕະພັນ ແລະນະວັດຕະກໍາໃໝ່ໃຫ້ກັບຊາດໄດ້, ມີຄຸນນະພາບສູງໃນການຈ້າງງານ ແລະສ້າງວຽກເຮັດງານທໍາ, ມີການເພີ່ມທັກສະໃຫ້ກັບຄົນໃນທ້ອງຖິ່ນ, ມີການສົ່ງເສີມສິດສະເໝີພາບບົດບາດຍິງ-ຊາຍ ແລະເປັນມິດຕໍ່ສິ່ງແວດລ້ອມ[24]; ຄ່ຽງຄູ່ກັບການທີ່ມີການລົງທຶນໂດຍກົງ ຈາກຕ່າງປະເທດທີ່ມີຄຸນນະພາບ ແລະປະສິດທິຜົນສູງ ໃນການປະກອບສ່ວນການພັດທະນາປະເທດແລ້ວ; ສໍາລັບ ສປປ ລາວ ແມ່ນຍັງມີຄວາມຮຽກຮ້ອງຕ້ອງການເພີ່ມດ້ານປະລິມານໃນການລົງທຶນໂດຍກົງຈາກຕ່າງປະເທດ ໃນຂະແໜງການຕ່າງໆ ທີ່ຈໍາເປັນໃຫ້ຫລາຍຂຶ້ນອີກດ້ວຍ; ດັ່ງນັ້ນ ມີຄວາມຈໍາເປັນຕ້ອງໄດ້ດໍາເນີນການ ຄື: **(1)** ຄ່ຽງຄູ່ກັບໂຄສະນາດຶງດູດການລົງທຶນຜ່ານບັນດາສະຖານທູດ, ກົງສູນ ແລະໜ່ວຍງານຜູ້ຕາງໜ້າບັນດາປະເທດ ແລະການຈັດເທດສະການ ແລະສື່ໂຄສະນາຕ່າງໆແລ້ວ ຈໍາເປັນຕ້ອງໄດ້ເອົາໃຈໃສ່ ໃນການລຶບລ້າງບັນດາສິ່ງກີດຂວາງ ໃນຂະບວນການລົງທຶນໂດຍກົງຂອງຕ່າງປະເທດ ພ້ອມກັບ ສ້າງຄວາມໂປ່ງໃສ ໃນຂອດຂັ້ນຕ່າງໆໃນຂະບວນການຄຸ້ມຄອງການລົງທຶນດັ່ງກ່າວ ເປັນຕົ້ນແມ່ນ ຂອດການຂຶ້ນທະບຽນ, ການຕິດຕາມກວດກາ, ການປະເມີນຜົນໂຄງການ ແລະກິດຈະການການລົງທຶນຂອງຕ່າງປະເທດນັ້ນ; **(2)** ຈັດລຽງບູລິມະສິດໃນການລົງທຶນຂອງຕ່າງປະເທດ ໃນບັນດາຂະແໜງການຕ່າງໆຢ່າງ ເໝາະສົມ ແລະແທດເໝາະກັບສະພາບເງື່ອນໄຂການພັດທະນາຕົວຈິງ ບົນພື້ນຖານເງື່ອນໄຂ ການລົງທຶນໂດຍກົງຈາກຕ່າງປະເທດທີ່ມີປະສິດຕິພາບນັ້ນ; ພ້ອມນັ້ນ ກໍໃຫ້ບູລິມະສິດພິເສດສໍາລັບຂະແໜງການ ທີ່ປະເທດເຮົາບໍ່ທັນສາມາດພັດທະນາໄດ້ ແຕ່ກົງກັນຂ້າມ ໃນຂົງເຂດ ແລະແໜງການໃດ ທີ່ຫົວໜ່ວຍທຸລະກິດ ຫລື ລັດວິສາຫະກິດພາຍໃນສາມາດເຮັດໄດ້ແລ້ວກໍຄວນໄດ້ຮັບການສະຫງວນໄວ້ສໍາລັບການລົງທຶນພາຍໃນ; **(3)** ການົດ ແລະດຶງດູດນັກລົງທຶນໃຫ້ຖືກເປົ້າ ໝາຍໂດຍຜ່ານຂະບວນການຄັດກ່ອງທີ່ໜ້າເຊື່ອຖືໄດ້ ໂດຍພິຈາລະນາຜົນການການລົງທຶນ ແລະຄວາມອາດສາມາດຕົວຈິງຂອງນັກລົງທຶນຕ່າງປະເທດ ແມ່ນຖືກຕ້ອງສອດຄ່ອງກັບແນວທາງນະໂຍບາຍການພັດທະນາຂອງຊາດ ແລະສາມາດຈັດຕັ້ງປະຕິບັດຕາມເງື່ອນໄຂມາດຖານການລົງທຶນໂດຍກົງຈາກຕ່າງປະເທດ ທີ່ມີຄຸນນະພາບ ແລະນິຕິກໍາຕ່າງໆ ຂອງ ສປປ ລາວຢ່າງເຄັ່ງຄັດ; (4) ມີຂະບວນການ ແລະກົນໄກອັນເໝາະສົມ ໃນການອານວຍຄວາມສະດວກໃຫ້ແກ່ການເຂົ້າມາລົງທຶນ

[24] OECD (2019), FDI Qualities Indicators: Measuring the sustainable development impacts of investment, Paris

ຂອງຕ່າງປະເທດ ເປັນຕົ້ນແມ່ນຂະບວນການດຳເນີນທາງດ້ານກົດໝາຍ ແລະຂໍ້ກຳນົດສະເພາະຂອງການລົງທຶນ ໃຫ້ມີຄວາມສະດວກ, ວ່ອງໄວ ແລະຖືກຕ້ອງຕາມຫລັກການລົງທຶນໂດຍກົງ ຂອງຕ່າງປະເທດທີ່ກຳນົດໄວ້; **(5)** ໃນການນຳໃຊ້ຂໍ້ຍົກເວັ້ນທາງດ້ານພາສີ ຫລື ລາຍຈ່າຍທີ່ຈຳເປັນໃຫ້ແກ່ລັດ ສຳລັບການລົງທຶນໂດຍກົງຈາກຕ່າງປະເທດ ຄວນໄດ້ຮັບການວິເຄາະ, ວິໄຈ ແລະປະມວນຜົນທັງໄລຍະສັ້ນ ແລະໄລຍະຍາວຢ່າງລະມັດລະວັງ ແລະລະອຽດຖີ່ຖ້ວນ ໂດຍຖືຜົນປະໂຫຍດຂອງຊາດເປັນທີ່ຕັ້ງຕົ້ນຕໍ ໃນການຄົ້ນຄວ້າວິຈາລະນາ ທີ່ຈະນຳໃຊ້ການຍົກເວັ້ນ ຫລື ໃຫ້ສິດທິພິເສດໃດໜຶ່ງທາງດ້ານພາສີອາກອນ ຈາກຂະບວນການລົງທຶນໂດຍກົງຂອງຕ່າງປະເທດນັ້ນ.

**4. ປະຕິຮູບໃນການຄຸ້ມຄອງການກູ້ຢືມທຶນຈາກຕ່າງປະເທດ ຢ່າງລວມສູນ ແລະຍົກລະດັບຂີດຄວາມສາມາດໃນການຊຳລະໜີ້ສິນຈາກການກູ້ຢືມຢ່າງເປັນລະບົບ ແລະມີລັກສະນະຍຸທະສາດ.**

ເພື່ອເປັນການປ້ອງກັນ, ສະກັດກັ້ນ ແລະແກ້ໄຂບັນຫາໜີ້ສິນສະສົມຂອງລັດ ທີ່ເກີດຈາກການກູ້ຢືມ ສຳລັບໂຄງການ ແລະ ແຜນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຢ່າງມີປະສິດຕິພາບສູງນັ້ນ **(1)** ປະຕິຮູບລະບົບການຄຸ້ມຄອງ, ກວດກາ ແລະປະມວນຜົນຂະບວນການກູ້ຢືມຢ່າງລວມສູນ ເພື່ອຮັບປະກັນຄວາມອາດສາມາດໃນການຊຳລະສະສາງ ແລະການໝູນໃຊ້ທຶນນັ້ນຢ່າງມີຄຸນນະພາບ ສາມາດສ້າງຜົນຕອບແທນໄດ້ໄວ ແລະ ເພື່ອຫລີກຫລ່ຽງການກູ້ຢືມທຶນເພື່ອການພັດທະນາໃນຂົງເຂດ ທີ່ບໍ່ມີລັກສະນະກະຕຸ້ນລະບົບເສດຖະກິດໄດ້ໄວ ແລະໃຫ້ຜົນຕອບແທນຊ້າ ແລະມີລັກສະນະກະແຈກກະຈ່າຍ ເຊິ່ງເປັນຕົ້ນເຫດສຳຄັນ ທີ່ເປັນການສ້າງພາລະໜີ້ສິນເພີ່ມເຕີມໃຫ້ກັບລັດຖະບານ; **(2)** ໃນຂະບວນການຄຸ້ມຄອງການກກູ້ຢືມທຶນຈາກຕ່າງປະເທດ ຈຳເປັນຕ້ອງໄດ້ຮັບການປະຕິບັດຄວບຄູ່ກັບຂະບວນການ ຕິດຕາມກວດກາ, ປະມວນຜົນຂອງການນຳໃຊ້ທຶນຂອງການກູ້ຢືມ ໃຫ້ໄປຕາມລະບຽບການ, ຂັ້ນຕອນ ແລະເງື່ອນໄຂຂອງຄວາມໂປ່ງໃສ ແລະຖືກກັບຈຸດປະສົງຂອງການກູ້ຢືມ. ໝາຍຄວາມວ່າ ຄວນມີມາດຕະການທີ່ຊັດເຈນ ແລະເດັດຂາດ ໃນການສະກັດກັ້ນ ແລະປ້ອງການການຮົ່ວໄຫລຂອງທຶນກູ້ຢືມ ໃນຮູບແບບຕ່າງໆ ແລະໄດ້ຮັບການໝູນໃຊ້ຢ່າງມີປະສິດຕິພາບສູງຕາມເປົ້າໝາຍ ທີ່ໄດ້ກຳນົດໄວ້ຂອງການກູ້ຢືມ; **(3)** ຈຳເປັນຕ້ອງໄດ້ຈັດບູລິມະສິດໃນການລົງທຶນ ທີ່ຊັດເຈນ ແລະສາມາດຮັບປະກັນໄດ້ວ່າທຶນທີ່ກູ້ຢືມນັ້ນ ຈະສາມາດຮັບປະກັນການຊຳລະຕົ້ນທຶນ ແລະອັດຕາດອກເບ້ຍຕ່າງໆ ດ້ວຍທຶນກູ້ຢືມດັ່ງກ່າວ ໃນໄລຍະເວລາເງື່ອນໄຂຂອງການກູ້ຢືມ ເພື່ອເປັນການຍຸຕິສາເຫດການກໍ່ໃຫ້ມີໜີ້ສະສົມເພີ່ມຂຶ້ນ ແຕ່ຂະບວນການພັດທະນາຂອງລັດຖະບານສາມາດດຳເນີນການຕໍ່ໄປໄດ້; **(4)** ຂຸດຄົ້ນທ່າແຮງບົ່ມຊ້ອນພາຍໃນ ແລະຖານລາຍຮັບສາຄັນຂອງຊາດ ຄ່ຽງຄູ່ກັບການຍົກລະດັບການຈັດຕັ້ງປະຕິບັດນະໂຍບາຍປະຢັດ ໃຫ້ກາຍເປັນວາລະແຫ່ງຊາດ ເພື່ອຮັບຮ້ອນການແກ້ໄຂບັນຫາໜີ້ສາທາລະນະ ແລະໜີ້ສິນຊຳ້ເຮື້ອ ຂອງລັດຖະບານຢ່າງເປັນຍຸທະສາດ ແລະມີວິໄນ; ໂດຍຈັດລ່ຽງບູລິມະສິດໃນການແກ້ໄຂ

ບັນຫາໜີ້ສິນ ທີ່ບໍ່ມີລັກສະນະກະຕຸ້ນລະບົບເສດຖະກິດ ແລະການພັດທະນາ ເປັນບູລິມະສິດພິເສດ ແລະແກ້ໄຂຊາລະໜີ້ສິນທີ່ໃຫ້ຜົນຕອບແທນຕ່ຳ ເປັນບັນຫາຮີບດ່ວນ.

ສັງລວມແລ້ວ ນະໂຍບາຍດຶງດູດທຶນຈາກພາຍນອກ ໃນການພັດທະນາຢູ່ລາວ ແມ່ນມີບົດບາດຄວາມສຳຄັນຫລາຍ ຕໍ່ກັບຄວາມອາດສາມາດຂອງພັກ-ລັດຖະບານ ແຫ່ງ ສປປ ລາວ ໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ຍ້ອນເຫັນໄດ້ບົດບາດຄວາມສຳຄັນຄືແນວນັ້ນ ພັກກໍໄດ້ມີແນວທາງທີ່ຊັດເຈນ ແລະສະເໜີຕົ້ນສະເໜີປາຍ ໃນການຊຸກຍູ້ ແລະຊີ້ນຳຢ່າງໃກ້ສິດຕໍ່ກັບການຈັດຕັ້ງປະຕິບັດ ການດຶງດູດທຶນຈາກພາຍນອກດ້ວຍຫລາກຫລາຍຮູບແບບວິທີການ; ຜ່ານການດຳເນີນການຕົວຈິງຂອງໜ່ວຍງານລັດຖະບານ ກໍສາມາດເຫັນໄດ້ຜົນສຳເລັດ ທີ່ພົ້ນເດັ່ນໃນຫລາຍດ້ານ ເປັນຕົ້ນແມ່ນໃນຂົງເຂດນິຕິກຳ ທີ່ໄດ້ສ້າງນິຕິກຳຂຶ້ນມາໃນການຮອງຮັບ ແລະເປັນພື້ນຖານບ່ອນອີງສຳຄັນໃຫ້ແດ່ການຈັດຕັ້ງການດຶງດູດທຶນຈາກຕ່າງປະເທດເຂົ້າຂັບເຄື່ອນແຜນການ ແລະໂຄງການພັດທະນາຂອງລັດ; ນອກຈາກນັ້ນ ກໍເຫັນໄດ້ ທຶນການຊ່ວຍເຫລືອທາງການເພື່ອການພັດທະນາ (ODA) ກໍມີແນວໂນ້ມເພີ່ມຂຶ້ນຢ່າງຕໍ່ເນື່ອງລຽນຕິດ, ຄ່ຽງຄູ່ກັບການລົງທຶນໂດຍກົງຂອງຕ່າງປະເທດກໍເພີ່ມສູງຂຶ້ນຢ່າງຕໍ່ເນື່ອງເຊັ່ນດຽວກັນ ແລະການກູ້ຢືມທຶນຈາກຕ່າງປະເທດ ກໍມີຈຳນວນເພີ່ມຫລາຍຂຶ້ນ ເຊິ່ງໄດ້ເປັນກຳລັງແຮງສັງລວມທີ່ສຳຄັນ ໃນການຂັບເຄື່ອນ ແລະຊຸກຍູ້ຂະບວນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ເປັນຂະບວນພົດພົ້ນ ແລະມີບາດກ້າວໃໝ່.

ເຖິງແມ່ນວ່າ ຈະສາມາດເຫັນໄດ້ຜົນສຳເລັດທີ່ໜ້າເພິ່ງພໍໃຈໃນຫລາຍດ້ານ ໃນຂະບວນການດຶງດູດທຶນຈາກພາຍນອກ ເພື່ອການພັດທະນາ ແຕ່ຜ່ານຄົ້ນຄວ້າ, ວິເຄາະວິໄຈ ກໍເຫັນໄດ້ວ່າການຈັດຕັ້ງປະຕິບັດການດຶງດູດທຶນ ເພື່ອນຳເຂົ້າມາພັດທະນາປະເທດຊາດນັ້ນ ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ຕ້ອງໄດ້ຮັບການແກ້ໄຂຢ່າງຮີບດ່ວນ ແລະທັນການ ເປັນຕົ້ນແມ່ນຂະບວນການສ້າງ ແລະອອກນິຕິກຳກ່ຽວກັບການການລະດົມທຶນຈາກພາຍນອກ ຍັງຢູ່ໃນຂອບເຂດຈຳກັດທາງດ້ານ ເນື້ອໃນແລະຂະບວນການບັງຄັບໃຊ້; ຂະບວນການຄຸ້ມຄອງທຶນ ແລະໂຄງການພັດທະນາ ທີ່ໄດ້ຮັບຈາກທຶນການຊ່ວຍເຫລືອຢ່າງເປັນທາງການເພື່ອການພັດທະນາ ຍັງບໍ່ທັນມີປະສິດຕິພາບສູງ, ຂາດຄຸນນະພາບໃນການແກ້ໄຂບັນຫາຕົວຈິງ ແລະບໍ່ທັນມີຄວາມຄວາມຍືນຍົງ; ການສົ່ງເສີມການດຶງດູດການລົງທຶນໂດຍກົງ ຈາກຕ່າງປະເທດຍັງບໍ່ທັນມີປະສິດຕິພາບສູງ, ການປະເມີນຕີລາຄາ ແລະຕິດຕາມກວດກາການລົງທຶນໂດຍກົງຂອງຕ່າງປະເທດ ຍັງບໍ່ທັນເປັນລະບົບຄົບຊຸດ ແລະຕໍ່ເນື່ອງ, ປະສິດຕິຜົນທາງດ້ານເສດຖະກິດຕ່ຳ; ລະບົບການຄຸ້ມຄອງ ແລະຊຳລະໜີ້ສິນກູ້ຢືມ ຂອງລັດຖະບານ ຍັງບໍ່ທັນມີລັກສະນະລວມສູນ, ບໍ່ເປັນລະບົບຕໍ່ເນື່ອງ ທີ່ມີຄຸນນະພາບສູງເທົ່າທີ່ຄວນ. ແຕ່ບັນດາຂໍ້ຄົງຄ້າງທີ່ກ່າວມານັ້ນ ກໍບໍ່ໄດ້ເດັດຖານ, ສາມາດປັບປຸງປ່ຽນແປງ ແລະແກ້ໄຂໄດ້ ເຊິ່ງຄວນເອົາໃຈໃສ່ ຄື: ສ້າງ ແລະປັບປຸງນິຕິກຳກ່ຽວກັບການລະດົມທຶນ ແລະດຶງດູດທຶນຈາກພາຍນອກ ໃຫ້ເປັນລະບົບຄົບຊຸດ,ຮອບດ້ານທີ່ອຸດົມສົມບູນ ແລະມີລັກສະນະຍຸທະສາດທາງດ້ານເນື້ອໃນ, ຮູບການ

ແລະການບັງຄັບໃຊ້ທີ່ເຂັ້ມງວດທົ່ວເຖິງ; ສ້າງຄວາມໜ້າເຊື່ອຖື, ເພີ່ມປະສິດຕິຜົນ ແລະຄວາມໂປ່ງໃສ ໃນການນາໃຊ້ທຶນໃຫ້ຖືກກັບເປົ້າໝາຍກັບການພັດທະນາ; ດຶງດູດ ແລະລະດົມການລົງທຶນໂດຍກົງຈາກຕ່າງປະເທດທີ່ມີຄຸນນະພາບສູງ ແລະມີປະສິດຕິພາບ; ປະຕິຮູບໃນການຄຸ້ມຄອງການກູ້ຢືມທຶນຈາກຕ່າງປະເທດ ຢ່າງລວມສູນ ແລະຍົກລະດັບຂີດຄວາມສາມາດໃນການຊໍາລະໜີ້ສິນຈາກການກູ້ຢືມຢ່າງເປັນລະບົບ ແລະມີລັກສະນະຍຸທະສາດ. ຖ້າສາມາດເຮັດໄດ້ແນວນັ້ນ ການດຶງດູດທຶນຈາກພາຍນອກເພື່ອການພັດທະນາ ກໍຈະມີບາດກ້າວໃໝ່ ທີ່ໄດ້ຮັບໝາກຜົນຕໍ່ການພັດທະນາຊາດເພີ່ມຫລາຍຂຶ້ນຢ່າງແນ່ນອນ.